ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ຕຸລາ 2025

ປີທີ 14

ສະບັບທີ 1036

ລາຍສັບປະດາ

## ສ້າງຄວາມຮັບຮູ້ພາລະບົດບາດ ສພຊ, ສພຂ ວຽກງານກິງຈັກການຈັດຕັ້ງ, ການກະກຽມການເລືອກຕັ້ງ



(ສພຊ) - ວັນທີ 29-30 ກັນຍານີ້, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມເຝິກອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ພາລະບົດບາດຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ວຽກງານໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ ແລະ ວຽກງານກະກຽມດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ແກ່ເລຂາ-ຮອງເລຂາພັກແຂວງ-ເມືອງ, ປະທານຄະນະກຳມະການປົກຄອງເມືອງ, ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ (ສພຂ) ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ

ອ່ານຕໍ່ໜ້າ 7

## ສອງສະມາຄົມມິດຕະພາບ ລາວ-ກຳປູເຈຍ ພົບປະແລກປ່ຽນຫຼາຍບັນຫາສຳຄັນ



(ສພຊ) - ພິທີພົບປະລະຫວ່າງຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ກຳປູເຈຍ ມີຂຶ້ນໃນວັນທີ 2 ຕຸລານີ້ ທີ່ນະຄອນຫຼວງວຽງຈັນ ນຳໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບລາວ-ກຳປູເຈຍແລະທ່ານ ພົອ. ນຽງ ພາດ ປະທານສະມາຄົມມິດຕະພາບ ກຳປູເຈຍ-ລາວ ພ້ອມດ້ວຍຄະນະຜູ້ແທນສອງຝ່າຍເຂົ້າຮ່ວມ.

ອ່ານຕໍ່ໜ້າ 8

## ເຝິກອົບຮົມສ້າງຄວາມຮັບຮູ້ພາລະບົດບາດ ສພຊ ແລະ ສພຂ



(ສພຂ) - ວັນທີ 2-3 ຕຸລານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ມີກອງປະຊຸມເຝິກອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ (ສພຊ), ມີທ່ານ ວັນໄຊ ພອງສະຫວັນ ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງຄຳມ່ວນ, ທ່ານ ບຸນມີ ພົມມະສອນປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍບັນດາທ່ານສຳມະນາກອນເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານສົມມາດພົລເສນາ ໄດ້ມີຄຳເຫັນວ່າ: ການເຝິກອົບຮົມຄັ້ງນີ້ແມ່ນເພື່ອເຜີຍແຜ່, ໂຄສະນາກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວ ໃຫ້ມີຄວາມເລິກເຊິ່ງ; ເປັນການຊຸກຍູ້, ແນະນຳແລະສ້າງຄວາມເປັນ

ອ່ານຕໍ່ໜ້າ 8

## ເຜີຍແຜ່ມະຕິການເຄື່ອນໄຫວວຽກງານສາຍດ່ວນ 156



(ສພຊ) - ກອງປະຊຸມເຜີຍແຜ່ມະຕິວ່າດ້ວຍການເຄື່ອນໄຫວວຽກງານສາຍດ່ວນ ແລະ ແລກປ່ຽນບົດຮຽນການຈັດຕັ້ງປະຕິບັດວຽກງານສາຍດ່ວນເພື່ອປັບປຸງຮ່າງປຶ້ມຄູ່ມືວຽກງານສາຍດ່ວນ ໃຫ້ແກ່ພະນັກງານສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໄດ້ຈັດຂຶ້ນໃນວັນທີ 3-5 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນວນທອງ ສຸວັນວິໄຊ ຮອງເລຂາທິການສະພາແຫ່ງຊາດ ຜູ້ຊີ້ນຳວຽກງານກົມກວດກາ; ມີບັນດາທ່ານວິທະຍາກອນຈາກສພຊ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີແລະອົງການກວດກາແຫ່ງລັດແລະສຳມະນາກອນຈາກບັນດາກົມພາຍໃນ ສພຊ

ອ່ານຕໍ່ໜ້າ 7



ແນວຄິດປະທານ

## ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການສ້າງ ແລະ ປັບປຸງບູລະນະລະບົບກົດໝາຍ ເທື່ອລະກ້າວນັ້ນ ຕ້ອງເຮັດຢ່າງມີຈຸດສຸມ, ແທດຕົວຈິງ, ມີການເລືອກເຟັ້ນໂດຍຕິດພັນກັບໜ້າທີ່ເສດຖະກິດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນແຕ່ລະໄລຍະ. ການສ້າງ ແລະ ປັບປຸງລະບົບກົດໝາຍ ຕ້ອງອີງໃສ່ພື້ນຖານວິທະຍາສາດ ແລະ ຕົວຈິງຢ່າງຄົບຖ້ວນຕາມຈິນຕະນາການໃໝ່ ແລະ ຕ້ອງປະຕິບັດພາຍໃຕ້ການນຳພາຂອງພັກ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 203)

ລັດປະຊາທິປະໄຕປະຊາຊົນ ໄດ້ຮັບການສ້າງຕັ້ງຂຶ້ນແລະເຄື່ອນໄຫວຕາມລັດຖະທຳມະນູນ ແລະ ກົດໝາຍ, ລັດຄຸ້ມຄອງສັງຄົມ ຕົ້ນຕໍແມ່ນດ້ວຍກົດໝາຍ ໂດຍນຳໃຊ້ມາດຕະການທາງດ້ານການຈັດຕັ້ງ, ສຶກສາອົບຮົມ, ໂຄສະນາຊວນເຊື່ອເປັນສຳຄັນ.

(ບົດໂອ້ລົມຂອງປະທານ ໄກສອນ ພົມວິຫານ, ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ໜ້າ 96)

ອ່ານຕໍ່ສະບັບໜ້າ




## ພົທ. ສຸວອນ ເລືອງບຸນມີ ຊຸກຍູ້ການປະຕິບັດວຽກງານ ສພຂ ຢູ່ອຸດົມໄຊ

(ສພຊ) - ຕອນບ່າຍວັນທີ 30 ກັນຍາຜ່ານມາ, ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ

ອ່ານຕໍ່ໜ້າ 8





ພຶດຕິກຳ... (ໜ້າ 9)



ກອງປະຊຸມ... (ໜ້າ 11)




ເມື່ອເສດຖີຍົກຍ້າຍໜີ... (ໜ້າ 12)

## ຊົມເຊີຍວັນຄູແຫ່ງຊາດ ຄົບຮອບ 31 ປີ (07/10/1994 - 07/10/2025) ຢ່າງສຸດໃຈ!

# ຕິດຕາມກວດກາ ແລະ ຊຸກຍູ້ການບໍລິການ ປິ່ນປົວສຸຂະພາບຢູ່ສະຖານບໍລິການປິ່ນປົວ



(ສພຊ) - ວັນທີ 2 ຕຸລາ ຜ່ານມາ, ທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະໄດ້ລົງຕິດຕາມກວດກາການບໍລິການປິ່ນປົວສຸຂະພາບຢູ່ສະຖານທີ່ບໍລິການປິ່ນປົວຂອງພາກລັດ, ເອກະຊົນ ແລະ ການເສີມຄວາມງາມ ຢູ່ບັນດາສູນເສີມຄວາມງາມໃນນະຄອນຫຼວງວຽງຈັນ ເຊິ່ງໄດ້ພົບປະ ແລະ ເຮັດວຽກຮ່ວມກັບຄະນະນຳຂອງກະຊວງສາທາລະນະສຸກ, ໂຮງໝໍມະໂហສົດ, ໂຮງໝໍກະເສມລາດ ແລະ ລົງເຄື່ອນໄຫວຢ້ຽມຢາມຄລີນິກແລະສູນເສີມຄວາມງາມຈຳນວນໜຶ່ງ ເພື່ອຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ບັນດາກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ (ສພຊ) ແລະ ນິຕິກຳອື່ນໆ ທີ່ຕິດພັນກັບການເຄື່ອນໄຫວວຽກງານດັ່ງກ່າວ ເນື່ອງຈາກວ່າເປັນບັນຫາທາງສຽງພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງສັງຄົມໃນປັດຈຸບັນ ທີ່ສະເໜີຜ່ານໂທລະສັບສາຍດ່ວນ 156 ໄລຍະດຳເນີນກອງປະຊຸມ ສພຊ ໃນໄລຍະຜ່ານມາ ເປັນຕົ້ນ: ການບໍລິການຕ້ອນຮັບຄົນເຈັບທີ່ຍັງບໍ່ເປັນທີ່ເພິ່ງພໍໃຈຂອງປະຊາຊົນ, ການເກັບຄ່າບໍລິການ ແລະ ຢາທີ່ມີລາຄາສູງ, ການເຄື່ອນໄຫວ ແລະ ການບໍລິການຂອງບັນດາຄລີນິກ ແລະ ສູນສິ່ງເສີມຄວາມງາມ ທີ່ບໍ່ທັນຖືກຕ້ອງຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງ ໂດຍສະເພາະການເສີມຄວາມງາມທີ່ບໍ່ທັນຮັບປະກັນຄວາມປອດໄພເທົ່າທີ່ຄວນເຮັດໃຫ້ມີຜົນກະທົບໃນການດຳລົງຊີວິດ ແລະ ຊັບສິນຂອງປະຊາຊົນ ເຊິ່ງທັງໝົດນີ້ ຈະໄດ້ນຳໄປຄົ້ນຄວ້າ, ວິເຄາະວິໄຈແລະຊອກຫາສາເຫດ, ຂໍ້ຄົງຄ້າງ, ມາດຕະການແກ້ໄຂ ເພື່ອນຳສະເໜີລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ຊາບ ແລະ ມີທິດຊີ້ນຳໃນການແກ້ໄຂ, ຊອກໃຫ້ເຫັນຂອດອຸດຕັນໃນການຄຸ້ມຄອງວຽກງານບໍລິການເສີມສວຍ, ເສີມຄວາມງາມ ຂອງຂະແໜງການທີ່ກ່ຽວຂ້ອງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 103/ສພຊ ກ່ຽວກັບຄຸນນະພາບການບໍລິການປິ່ນປົວຢູ່ໂຮງໝໍ, ສຸກສາລາ ແລະ ທິດທາງແກ້ໄຂໃນຕໍ່ໜ້າ; ການຈັດຕັ້ງປະຕິບັດບັນດານິຕິກຳຂອງຂະແໜງການສາທາລະນະສຸກ ເປັນຕົ້ນ: ນະໂຍບາຍ 5 ດີ 1 ພໍໃຈ, ດຳລັດວ່າດ້ວຍໂຮງໝໍເອກະຊົນ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສູນປິ່ນປົວ ຫຼື ສູນການແພດ ແລະ ຫ້ອງກວດພະຍາດເອກະຊົນ. ຈາກນັ້ນ, ໄດ້ໄປຢ້ຽມຢາມໂຮງໝໍ, ຄລີນິກ ແລະ ສູນເສີມຄວາມງາມຈຳນວນໜຶ່ງ ເພື່ອເກັບກຳສະພາບການດຳເນີນກິດຈະການ, ດ້ານບຸກຄະລາກອນ, ອຸປະກອນການແພດ, ການກຳນົດຄ່າບໍລິການປິ່ນປົວ ແລະ ຄ່າຢາ, ການສ້າງວຽກເຮັດງານທຳ, ການປະຕິບັດນະໂຍບາຍຕໍ່ພະນັກງານ ແລະ ການບໍລິການເສີມຄວາມງາມ, ຂໍ້ສະດວກ ຂໍ້ຫຍຸ້ງຍາກ ແລະ ວິທີການແກ້ໄຂໃນຕໍ່ໜ້າ; ພ້ອມກັນນີ້, ກໍໄດ້ມີການປະກອບຄຳຄິດຄຳເຫັນ, ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ.

ທ່ານປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຂະແໜງການສາທາລະນະສຸກ ແລະ ບັນດາໂຮງໝໍ ຕໍ່ຜົນງານທີ່ຍາດມາໄດ້ ທັງເນັ້ນໜັກໃຫ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາວຽກງານດັ່ງກ່າວ ໃຫ້ໄປຕາມກົດໝາຍ ແລະ ນິຕິກຳທີ່ກຳນົດໄວ້ ທັງການກຳນົດລາຄາການປິ່ນປົວຢູ່ໂຮງໝໍພາກລັດແລະເອກະຊົນໃຫ້ມີຄວາມເປັນເອກະພາບກັນ, ມີຄວາມເໝາະສົມ ແລະ ເປັນທຳ; ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ໃນການສ້າງນິຕິກຳທີ່ຈຳເປັນ, ສ້າງກົນໄກການປະສານງານແລະແບ່ງຄວາມຮັບຜິດຊອບກັນຢ່າງລະອຽດຈະແຈ້ງ ໃນການຄຸ້ມຄອງວຽກງານເສີມສວຍ ແລະ ເສີມຄວາມງາມ.




# ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ເຄື່ອນໄຫວຢ້ຽມຢາມປະເທດຍີ່ປຸ່ນ



(ສພຊ) - ປະຕິບັດຕາມການເຊີນຂອງປະທານສະມາຄົມມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ ຂອງສະພາຜູ້ແທນລາສະດອນຍີ່ປຸ່ນ, ຄະນະຜູ້ແທນຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ສຳເລັດການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢ່າງເປັນທາງການຢູ່ປະເທດຍີ່ປຸ່ນ ໃນລະຫວ່າງວັນທີ 28 ກັນຍາ - 3 ຕຸລາ 2025 ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນດີງາມຂອງສອງປະເທດ ເນື່ອງໃນໂອກາດວັນສ້າງຕັ້ງສາຍພົວພັນການທູດ ລາວ-ຍີ່ປຸ່ນ ຄົບຮອບ 70 ປີ (05/3/1955-05/3/2025).

ການເຄື່ອນໄຫວຄັ້ງນີ້, ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ພົບປະເຮັດວຽກສອງຝ່າຍກັບທ່ານ ນາງ ຊືຈິຍະ ຊິນາໂກະ ປະທານສະມາຄົມມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ ຂອງສະພາຜູ້ແທນລາສະດອນຍີ່ປຸ່ນ ພ້ອມດ້ວຍຄະນະ ດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ ເຊິ່ງສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ, ຕີລາຄາສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງຄະນະມິດຕະພາບໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງແຜນການຮ່ວມມືໃນຕໍ່ໜ້າ; ເຂົ້າຢ້ຽມຂໍ່ານັບທ່ານ ນຶກາງະ ຟູກູຊິໂຣະ ປະທານສະພາຜູ້ແທນລາສະດອນຍີ່ປຸ່ນ, ຢ້ຽມຊົມຫໍສະພາປະເທດຍີ່ປຸ່ນ, ພົບປະແລກປ່ຽນບົດຮຽນກ່ຽວກັບການຕິດຕາມກວດກາວຽກງານຍຸຕິທຳຂອງສະພາຍີ່ປຸ່ນ, ການສ້າງ ແລະ ປັບປຸງກົດໝາຍຂອງປະເທດຍີ່ປຸ່ນ ເຊິ່ງທັງສອງຝ່າຍໄດ້ມີການແລກປ່ຽນຄຳເຫັນນຳກັນຢ່າງກົງໄປກົງມາ; ນອກຈາກນີ້, ຍັງໄດ້ພົບປະທ່ານ ມາຍາຈິ ທາກົມະ ຮອງລັດຖະມົນຕີກະຊວງການຕ່າງປະເທດຂອງຍີ່ປຸ່ນ, ທັດສະນະສຶກສາແລກປ່ຽນບົດຮຽນຢູ່ແຂວງໄຊຕະມະ ໂດຍການຕ້ອນຮັບຂອງທ່ານ ຊິຣາໂຕະ ຢູກິຣິໂຕະ ປະທານສະພາແຂວງໄຊຕະມະ, ທ່ານ ໂອໂນະໂມໂຕຮິໂຣະເຈົ້າແຂວງໄຊຕະມະ ແລະ ທ່ານ ຊິມິສຶ ຮາຢາໂຕະເຈົ້ານະຄອນໄຊຕະມະພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງນະຄອນໄຊຕະມະ. ຫຼັງຈາກນັ້ນ, ໄດ້ສືບຕໍ່ເດີນທາງໄປທັດສະນະຢູ່ເມືອງກຽວໂຕ ແລະ ເດີນທາງໄປຢ້ຽມຊົມງານວາງສະແດງ OSAKA EXPO 2025.

ການໄປຢ້ຽມຢາມແລະເຮັດວຽກຢ່າງເປັນທາງການຂອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນໃນຄັ້ງນີ້ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍແລະເພີ່ມພູນຄູນສ້າງສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມແລະການພົວພັນຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານຂອງສອງປະເທດເວົ້າລວມ, ເວົ້າສະເພາະລະຫວ່າງສອງສະພາແຫ່ງຊາດ ກໍຄືຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວຍິ່ງໆຂຶ້ນ.

# ມອບ-ຮັບຄອມພິວເຕີ 2 ໜ່ວຍ



(ສພຊ) - ຕອນສວາຍວັນພຸດທີ 01 ຕຸລານີ້ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບຄອມພິວເຕີຕັ້ງໂຕະ 2 ໜ່ວຍ ລວມມູນຄ່າ 25.4 ລ້ານກີບ ຈາກທະນາຄານພົງສະຫວັນ, ຕາງໜ້າກ່າວມອບໂດຍທ່ານ ສີວິໄລ ພົມມະຈັກ ຜູ້ອຳນວຍການທະນາຄານພົງສະຫວັນແລະຕາງໜ້າກ່າວຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທ່ານ ປອ. ອາຄົມ ປຣະເສີດ ໄດ້ກ່າວສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດເພື່ອຊົມເຊີຍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ແລະອຸປະຖຳຄັ້ງນີ້.

**(ສອນສັກ ວັນວິໄຊ)**

# ຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ມົງໂກລີ



(ສພຊ)-ຕອບສະໜອງການເຊື້ອເຊີນຂອງທ່ານ ຈາຣ໌ກັນໄຊຄານ ດຳດິນຊູເຣນ (JARGALSAIKHAN DAMDINSUREN)ປະທານຄະນະມິດຕະພາບລັດຖະສະພາມົງໂກລີ-ລາວ, ສະພາຄູຣານໃຫຍ່ ແຫ່ງປະເທດມົງໂກລີ; ຄະນະຜູ້ແທນສະພາແຫ່ງຊາດລາວນຳໂດຍທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ປະເທດມົງໂກລີ ລະ ຫວ່າງວັນທີ 30 ກັນຍາ - 4 ຕຸລາ 2025 ຈຸດປະສົງແມ່ນເພື່ອຮັດແໜ້ນ ແລະເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີລະຫວ່າງ ລາວ-ມົງໂກລີ ກໍຄືການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດ ແລະ ສະພາຄູຣານໃຫຍ່ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ, ແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດສອງປະເທດແລະການແລກປ່ຽນຂໍ້ມູນຂ່າວສານໃນການເຄື່ອນໄຫວວຽກງານຂອງຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ, ມົງໂກລີ-ລາວ ທັງເປັນການຊຸກຍູ້ການຮ່ວມມືທາງດ້ານເສດຖະກິດ-ສັງຄົມ ເປັນຕົ້ນດ້ານການສຶກສາ, ການຄ້າ, ການລົງທຶນ, ກະສິກຳ, ການທ່ອງທ່ຽວ ແລະ ຂົງເຂດອື່ນໆ ທີ່ສອງຝ່າຍມີທ່າແຮງແລະມີຄວາມສົນໃຈນຳກັນ.

ວັນທີ 30 ກັນຍາ, ທ່ານ ພົຕ. ປອ. ວົງສັກ ພັນທະວົງ ແລະຄະນະ ໄດ້ພົບປະເຮັດວຽກສອງຝ່າຍກັບທ່ານ ດ. ຈາຣ໌ກັນໄຊຄານ ພ້ອມດ້ວຍຄະນະດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ ແລະສະໜິດສະໜົມ ເຊິ່ງສອງຝ່າຍໄດ້ທົບທວນຄືນການພົວພັນຮ່ວມມືໃນໄລຍະຜ່ານມາແລະແຈ້ງສະພາບວຽກງານຂອງຕົນໃຫ້ກັນຊາບ; ພ້ອມນີ້,ຍັງໄດ້ຕີລາຄາສູງການພົວພັນຮ່ວມມືຂອງສອງປະເທດ, ສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບ ທີ່ໄດ້ມີການແລກປ່ຽນການຢ້ຽມຢາມ, ຂໍ້ມູນຂ່າວສານແລະໂທລະເລກອວຍພອນຊົມເຊີຍເຊິ່ງກັນແລະກັນຢ່າງປົກກະຕິຕໍ່ເນື່ອງ; ສືບຕໍ່ພົວພັນທາງດ້ານການເມືອງທີ່ມີມູນເຊື້ອເພື່ອສົ່ງເສີມການຮ່ວມມືທາງດ້ານເສດຖະກິດ-ການຄ້າ, ການລົງທຶນ, ການຂົນສົ່ງ, ການສຶກສາ, ການທ່ອງທ່ຽວລະຫວ່າງສອງປະເທດ ໃຫ້ເປັນຮູບປະທຳຫຼາຍຂຶ້ນ.

ວັນດຽວກັນ,ທ່ານພົຕ. ປອ. ວົງສັກ ພັນທະວົງ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ນາງ ຄູເຣນບາຕາຣ໌ ບູນກັນຕູຢາ (Khurelbaatar BULGANTUYA) ຮອງປະທານສະພາຄູຣານໃຫຍ່ເຊິ່ງສອງຝ່າຍ ໄດ້ແຈ້ງສະພາບການພົ້ນເດັ່ນຂອງປະເທດໃຫ້ກັນຊາບ, ຕີລາຄາສູງສາຍພົວພັນມິດຕະພາບທີ່ດີມີມູນເຊື້ອມາແຕ່ດົນນານ ແລະ ການພົວພັນຮ່ວມມືທີ່ດີລະຫວ່າງ ລາວ-ມົງໂກລີ ເວົ້າລວມ, ເວົ້າສະເພາະການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດ ແລະ ສະພາຄູຣານໃຫຍ່ ໃຫ້ນັບມື້ໄດ້ຮັບການຮັດແໜ້ນແທດຕົວຈິງຫຼາຍຂຶ້ນ. ທ່ານຮອງປະທານສະພາຄູຣານໃຫຍ່ ໄດ້ຕີລາຄາການຮ່ວມມືດ້ານການສຶກສາຂອງສອງປະເທດ ເຫັນວ່າໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ໂດຍປັດຈຸບັນມີນັກສຶກສາລາວ 55 ຄົນ ພວມສຶກສາຢູ່ມົງໂກລີ ແລະ ນັກສຶກສາມົງໂກລີ 9 ຄົນ ພວມສຶກສາຢູ່ ສປປລາວ, ຕີລາຄາສູງຕໍ່ຄວາມພະຍາຍາມຂອງນັກສຶກສາລາວ ເຖິງວ່າພາສາມົງໂກລີເປັນພາສາທີ່ຍາກ ແຕ່ກໍໄດ້ບຸກບືນສຶກສາຮໍ່າຮຽນ ແລະຜ່ານຜ່າໄດ້; ພ້ອມກັນນີ້, ທ່ານຍັງໃຫ້ທິດຊີ້ນຳໃນການພົວພັນຮ່ວມມືໃນຕໍ່ໜ້າລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ເປັນຕົ້ນແມ່ນການປະຕິບັດຕາມບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືຂອງສອງສະພາທີ່ໄດ້ຮ່ວມກັນລົງນາມ,ເພີ່ມທະວີການຮ່ວມມືໃຫ້ເລິກເຊິ່ງກວ່າເກົ່າ, ຮ່ວມກັນຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂໍ້ຕົກລົງຕ່າງໆທີ່ສອງປະເທດໄດ້ລົງນາມຮ່ວມກັນ ໂດຍສະເພາະຊຸກຍູ້ການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຄົມມະນາຄົມທາງອາກາດເພື່ອໃຫ້ມີຄວາມສະດວກທາງດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ, ການໄປມາຫາສູ່ກັນໃຫ້ມີຄວາມສະດວກຍິ່ງຂຶ້ນ ກໍຄືການພັດທະນາຂອງສອງປະເທດ.

ນອກນີ້, ຄະນະຜູ້ແທນສະພາແຫ່ງຊາດ ຍັງໄດ້ພົບປະແບບບໍ່ເປັນທາງການກັບບັນດາທ່ານສະມາຊິກສະພາຄູຣານໃຫຍ່ທີ່ເປັນລັດຖະມົນຕີ ຄື: ລັດຖະມົນຕີກະຊວງຖະໜົນແລະການຂົນສົ່ງ ທັງເປັນປະທານຄະນະກຳມະການຮ່ວມມືດ້ານເສດຖະກິດ,ວິທະຍາສາດແລະເຕັກນິກລະຫວ່າງລັດຖະບານ ມົງໂກລີ-ລາວ; ລັດຖະມົນຕີກະຊວງຄອບຄົວ, ແຮງງານ ແລະ ປ້ອງກັນສັງຄົມ; ລັດຖະມົນຕີກະຊວງຍຸຕິທຳແລະພາຍໃນ. ໄປຢ້ຽມຢາມພົບປະແລກປ່ຽນກັບທ່ານຜູ້ບັນຊາການທະຫານຊາຍແດນ,ຫົວໜ້າກົມໃຫຍ່ປ້ອງກັນຊາຍແດນຂອງກະຊວງຍຸຕິທຳ ແລະ ພາຍໃນ.

ລະຫວ່າງວັນທີ 2-4 ຕຸລາ, ໄດ້ເດີນທາງໄປຢ້ຽມຢາມພື້ນຖານການຜະລິດເສດຖະກິດ ແລະ ວັດທະນະທຳຈຳນວນໜຶ່ງຢູ່ນະຄອນຫຼວງອູລານບາຕໍ, ຢ້ຽມຢາມສະຖານທູດ ແຫ່ງ ສປປລາວ ປະຈຳປະເທດມົງໂກລີພ້ອມທັງພົບປະນັກສຶກສາລາວ ທີ່ກຳລັງສຶກສາຮໍ່າຮຽນຢູ່ມົງໂກລີ, ບັນດາທ່ານອະດີດນັກການທູດ ແລະຊ່ຽວຊານມົງໂກລີປະຈຳລາວຈຳນວນໜຶ່ງອີກດ້ວຍ.

# ກຕທ ເຄື່ອນໄຫວຕິດຕາມກວດກາ ຢູ່ຈຳປາສັກ ແລະ ສາລະວັນ



(ສພຊ) - ວັນທີ 28 ກັນຍາ - 4 ຕຸລາ 2025, ທ່ານ ສົນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ (ກຕທ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ ແລະ ແຂວງສາລະວັນ.

ໃນໄລຍະເຄື່ອນໄຫວວຽກງານຢູ່ສອງແຂວງ, ທ່ານປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະທ່ານສົມບູນ ເຮືອງວົງສາ ຮອງເລຂາຄະນະບໍລິຫານງານພັກແຂວງຈຳປາສັກ ແລະທ່ານ ປອ. ດາວວົງ ພອນແກ້ວ ເລຂາຄະນະບໍລິຫານງານພັກແຂວງສາລະວັນ, ເຊິ່ງທ່ານປະທານ ກຕທ ໄດ້ແຈ້ງຈຸດປະສົງຂອງການເຄື່ອນໄຫວໃນຄັ້ງນີ້ ໃຫ້ແກ່ການນຳຂັ້ນສູງຂອງສອງແຂວງຮັບຊາບໂດຍຫຍໍ້ ໂດຍສະເພາະແມ່ນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດແລະບັນດາສົນທິສັນຍາ-ສັນຍາສາກົນທີ່ ສປປລາວ ເປັນພາຄີ ລວມທັງການຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືລະຫວ່າງສອງລັດຖະບານ ລາວ-ຫວຽດນາມ, ລາວ-ຈີນແລະສະພາບການຄຸ້ມຄອງໂຄງການຊ່ວຍເຫຼືອລ້າເພື່ອການພັດທະນາ (ODA) ຂອງ ສສ.ຫວຽດນາມ ແລະສປຈີນ; ເກັບກຳຂໍ້ມູນກ່ຽວກັບການລົງທຶນຕ່າງປະເທດ ທີ່ອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມແລະການດຳລົງຊີວິດຂອງປະຊາຊົນ; ເກັບກຳບັນຫາການແຕ່ງງານທີ່ຜິດກົດໝາຍ, ການຄຸ້ມຄອງຄົນຕ່າງປະເທດເຂົ້າ-ອອກເມືອງແບບຜິດກົດໝາຍ; ຕິດຕາມກວດກາມາດຕະຖານດ່ານສາກົນແລະການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່ປະຈຳດ່ານຢູ່ 2 ແຂວງ ຕາມດຳລັດວ່າດ້ວຍດ່ານເຂົ້າ-ອອກ ສປປລາວ ສະບັບເລກທີ 643/ລບ, ລົງວັນທີ 25 ພະຈິກ 2024.

ຄະນະໄດ້ເຂົ້າຮ່ວມກອງປະຊຸມພົບປະເຮັດວຽກກັບທ່ານຮອງປະທານສະພາປະຊາຊົນຂອງສອງແຂວງ ແລະ ຮັບຟັງການລາຍງານຈາກການນຳຂອງພະແນກການທີ່ກ່ຽວຂ້ອງຂອງແຂວງ ເປັນຕົ້ນແມ່ນພະແນກການຕ່າງປະເທດ, ພະແນກການເງິນ, ພະແນກພະລັງງານ ແລະບໍ່ແຮ່, ພະແນກອຸດສາຫະກຳ ແລະ ການຄ້າ, ກອງບັນຊາການປກສແລະກອງບັນຊາການທະຫານແຂວງ ກ່ຽວກັບສະພາບການເຄື່ອນໄຫວວຽກງານຂອງຕົນ ພ້ອມທັງຍົກໃຫ້ເຫັນເຖິງຜົນສຳເລັດສຳຄັນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີຈຳນວນໜຶ່ງ.

ໃນການພົບປະການນຳຂອງແຂວງ, ສະພາປະຊາຊົນແຂວງແລະພະແນກການທີ່ກ່ຽວຂ້ອງອ້ອມຂ້າງທັງສອງແຂວງ, ເຫັນໄດ້ເຖິງຜົນງານ ແລະ ຜົນສຳເລັດອັນພົ້ນເດັ່ນໃນຫຼາຍດ້ານ ເຖິງແມ່ນວ່າຈະຍັງມີຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງໃນການຈັດຕັ້ງປະຕິບັດວຽກງານ; ທ່ານປະທານກຳມາທິການການຕ່າງປະເທດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍເຈົ້າໜ້າທີ່ລັດໃນການປະຕິບັດວຽກງານດ້ວຍຄວາມເອົາໃຈໃສ່ ແລະ ໄດ້ເນັ້ນໃຫ້ທັງສອງແຂວງ ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໂດຍຖືເອົາລັດຖະທຳມະນູນ,ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງເປັນບ່ອນອີງໃນການ ຈັດຕັ້ງຜັນຂະຫຍາຍໃຫ້ມີຄວາມຖືກຕ້ອງສອດຄ່ອງ.

ຄະນະຍັງໄດ້ໄປຢ້ຽມຢາມ ແລະ ເຮັດວຽກຢູ່ສະຖານທີ່ຕົວຈິງກັບເຈົ້າໜ້າທີ່ປະຈຳດ່ານສາກົນຂອງສອງແຂວງເປັນຕົ້ນແມ່ນດ່ານສາກົນວັງເຕົ່າ (ລາວ-ໄທ) ແລະດ່ານສາກົນໜອງນົກຂຽນ (ລາວ-ກຳປູເຈຍ) ຢູ່ແຂວງຈຳປາສັກ, ດ່ານສາກົນລະໄລ (ລາວ-ຫວຽດນາມ) ແລະ ດ່ານສາກົນປາກຕາພານ (ລາວ-ໄທ) ຢູ່ແຂວງສາລະວັນ; ຢ້ຽມຢາມເຂດເສດຖະກິດທ່າບົກ-ວັງເຕົ່າ ເມືອງໂພນທອງ ທີ່ເປັນໜຶ່ງໃນ 9 ຈຸດ ຂອງທ່າບົກທົ່ວປະເທດ ເຊິ່ງລັດຖະບານໄດ້ເປັນພາຄີໃນສົນທິສັນຍາສາກົນລະຫວ່າງປະເທດວ່າດ້ວຍທ່າບົກ, ຢ້ຽມຢາມໂຄງການເສດຖະກິດສີພັນດອນ, ແຫຼ່ງທ່ອງທ່ຽວນ້ຳຕົກຕາດຄອນພະເພັງ ຢູ່ເມືອງໂຂງ ແຂວງຈຳປາສັກ; ຢ້ຽມຢາມໂຮງງານຜະລິດແປ້ງມັນຕົ້ນຄູນມີໄຊ ຢູ່ເມືອງສະມ້ວຍ ແລະ ບໍລິສັດ ປຸງແຕ່ງແປ້ງມັນຕົ້ນຕະໂອ້ຍ ຈຳກັດຜູ້ດຽວ (APFCO) ຢູ່ເມືອງຕະໂອ້ຍ ແຂວງສາລະວັນ.



# ຮອງປະທານ ກວທສ ເຄື່ອນໄຫວວຽກງານຢູ່ບໍລິຄໍາໄຊ




(ສພຊ) - ວັນທີ 2 ຕຸລາ ຜ່ານມາ, ທ່ານ ນາງ ມະນີວັນ ເຍຍປາວເຣີຮອງປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງບໍລິຄຳໄຊໂດຍການຕ້ອນຮັບຂອງ ທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊຊົນແຂວງ; ຈຸດປະສົງແມ່ນເພື່ອຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ປະຈຳປີ 2025 ເພື່ອເກັບກຳຂໍ້ມູນລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ສພຊ) ແລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ທີ່ຈະມາເຖິງນີ້.

ໃນການເຄື່ອນໄຫວໄດ້ເປີດກອງປະຊຸມຮ່ວມກັບຄະນະປະຈຳສະພາປະຊາຊົນແຂວງ ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງ ເຊິ່ງໄດ້ຮັບຟັງການລາຍງານສະພາບລວມການຈັດຕັ້ງປະຕິບັດວຽກງານດ້ານຕ່າງໆ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນ ຈາກຜູ້ຕາງໜ້າບັນດາພະແນກການໂດຍສະເພາະການຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດ, ການຈັດຕັ້ງປະຕິບັດນະໂຍບາຍຕໍ່ພະນັກງານຜູ້ມີຜົນງານແລະຄຸນງາມຄວາມດີຕໍ່ການປະຕິວັດຊາດປະຊາທິປະໄຕ, ການຈັດຕັ້ງປະຕິບັດນະໂຍບາຍ 5 ດີ 1 ພໍໃຈ, ການຄຸ້ມຄອງການນຳໃຊ້ກອງທຶນປະກັນສຸຂະພາບ, ການເຄື່ອນໄຫວຂອງສະຖານທີ່ບໍລິການປິ່ນປົວ ໂດຍສະເພາະໂຮງໝໍແລະສູນປິ່ນປົວສຸຂະພາບ, ການຈັດຕັ້ງປະຕິບັດມະຕິ 09/ນຍ, ລົງວັນທີ 17 ກໍລະກົດ 2023 ວ່າດ້ວຍນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນແລະການສົ່ງເສີມເຂົ້າຮຽນວິຊາຊີບ, ການຈັດຕັ້ງປະຕິບັດໂຄງການອາຫານທ່ຽງໃນໂຮງຮຽນ, ການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດ, ການສົ່ງເສີມການທ່ອງທ່ຽວທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແລະ ອື່ນໆ; ທັງນີ້, ກໍເພື່ອເກັບກຳຂໍ້ມູນການຈັດຕັ້ງປະຕິບັດວຽກງານ ເພື່ອຊອກໃຫ້ເຫັນສະພາບ, ຜົນສຳເລັດ, ຈຸດອ່ອນ, ຂໍ້ຄົງຄ້າງ, ສາເຫດຂອງບັນຫາ, ວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ, ນຳເອົາບັນຫາດັ່ງກ່າວສະເໜີຕໍ່ລັດຖະບານພິຈາລະນາແກ້ໄຂ.

ຕອນບ່າຍວັນດຽວກັນ, ທ່ານ ນາງ ມະນີວັນ ເຍຍປາວເຣີ ແລະ ທ່ານ ໃສຄຳ ທອງລັດ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ວຽກງານຢູ່ໂຮງໝໍແຂວງເຊິ່ງໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບສະພາບລວມການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາຈາກທ່ານ ນາງ ດຣ. ພັດສະດີ ວົງສິນນະສອນ ອຳນວຍການໂຮງໝໍແຂວງ; ຮອງປະທານ ກວທສ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການຈັດຕັ້ງປະຕິບັດວຽກງານດ້ານຕ່າງໆຂອງໂຮງໝໍແຂວງໃນໄລຍະຜ່ານມາ ທັງຕີລາຄາສູງຕໍ່ຜົນງານທີ່ຍາດມາໄດ້ເປັນຕົ້ນແມ່ນບໍລິການສັງຄົມ ແລະ ເນັ້ນໜັກບາງບັນຫາທີ່ຕ້ອງເອົາໃຈໃສ່ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ ແລະ ມີຜົນສຳເລັດ.

ກ່ອນໜ້ານັ້ນ ວັນທີ 1 ຕຸລາ, ທ່ານ ນາງ ມະນີວັນ ເຍຍປາວເຣີ ໄດ້ເຂົ້າພົບທ່ານ ປອ. ສອນທະນູ ທຳມະວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງບໍລິຄຳໄຊ ເພື່ອແຈ້ງຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້.

**(ລະອອງດາວ)**

# ປັບປຸງຮ່າງມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດ



(ສພຊ) - ກອງປະຊຸມຄົ້ນຄວ້າປັບປຸງຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດແລະຮ່າງຄູ່ມືການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 30 ກັນຍາ ຫາ 2 ຕຸລາ 2025ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງທ່ານສິງຄຳ ວົງພະຈັນຮອງເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານຄະນະກົມ, ສູນ ແລະ ຫ້ອງການ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງພາຍໃນສະພາແຫ່ງຊາດ (ສພຊ).

ຈຸດປະສົງແມ່ນເພື່ອຮັບປະກັນຄວາມພ້ອມໃຫ້ແກ່ການກະກຽມປັບປຸງກົງຈັກ ໂດຍສະເພາະການຈັດຕັ້ງແລະການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງຂຶ້ນ; ເພື່ອເປັນຄູ່ມືໃນການຜັນຂະຫຍາຍການຈັດຕັ້ງປະຕິບັດພາລະບາດ, ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ກ່ຽວກັບການກະກຽມ, ຮຽກໂຮມ ແລະ ນຳພາການດຳເນີນກອງປະຊຸມສະໄໝສາມັນ ແລະ ວິສາມັນ ຂອງ ສພຊ; ເພື່ອຄົ້ນຄວ້າ, ປະກອບຄຳເຫັນຕໍ່ຮ່າງຄູ່ມືການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດ, ລະດົມຄວາມຄິດເຫັນໃນການປັບປຸງຮ່າງນິຕິກຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດ ແລະ ບັນດາກົມທີ່ຂຶ້ນກັບ ໃຫ້ມີເນື້ອໃນລະອຽດ, ຊັດເຈນ ແລະ ຮັດກຸມຂຶ້ນຕື່ມ.

ທ່ານ ສິງຄຳ ວົງພະຈັນ ໄດ້ມີຄຳເຫັນວ່າ: ການປັບປຸງນິຕິກຳສຳນັກງານອົງການຂອງລັດເຮົາ ແມ່ນມີຄວາມສຳຄັນຫຼາຍຢູ່ໃນກົງຈັກການຈັດຕັ້ງ ໂດຍສະເພາະແມ່ນຫ້ອງວ່າການສະພາແຫ່ງຊາດ ທັງນີ້, ກໍເພື່ອຮັບປະກັນເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຫ້ອງວ່າການ ເປັນຕົ້ນ: ວຽກງານເນື້ອໃນ, ເລຂານຸການ, ຈັດຕັ້ງ-ພະນັກງານ, ກວດກາ, ບໍລິຫານ, ການເງິນ, ໂຄສະນາຂ່າວສານ, ພົວພັນປະສານງານ ແລະ ອື່ນໆ ດີຂຶ້ນກວ່າເກົ່າ; ພ້ອມນີ້, ກໍເປັນການຍົກສູງສະຕິຄວາມຮັບຜິດຊອບໃນຖານະທີ່ເປັນເສນາທິການໃຫ້ແກ່ສະພາແຫ່ງຊາດໃຫ້ນັບມື້ຫັນເຂົ້າສູ່ລະບົບລະບຽບ, ມີຄວາມໂລ່ງລ່ຽນ, ວ່ອງໄວ ແລະ ຄຸນນະພາບດີຂຶ້ນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດ, ຮ່າງຄູ່ມືກອງປະຊຸມສະພາແຫ່ງຊາດ, ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄົ້ນຄວ້າ-ສັງລວມ ແລະ ກົມເລຂານຸການ ເຊິ່ງບັນດານິຕິກຳເຫຼົ່ານີ້ ມີຄວາມສຳຄັນຫຼາຍ ເນື່ອງຈາກພົວພັນໂດຍກົງເຖິງການປະຕິບັດພາລະບົດບາດໃນການຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການເປັນເສນາທິການ ເພື່ອເຮັດໃຫ້ວຽກງານຂອງ ສພຊ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງມີໝາກຜົນ, ຮັບປະກັນຄວາມສອດຄ່ອງ ແລະ ຄວາມເປັນເອກະພາບໃນການປະຕິບັດພາລະບົດບາດຂອງຕົນຕາມກົດໝາຍ; ຈາກນັ້ນ, ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ຖອດຖອນບົດຮຽນ ແລະປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ສຳເລັດຜົນຕາມລະດັບຄາດໝາຍທີ່ວາງໄວ້.

# ນຳສະເໜີບັນທຶກຄວາມເຂົ້າໃຈຂອງ ໂຄງການສ້າງຄວາມເຂັ້ມແຂງ



(ສພຊ) - ກອງປະຊຸມນຳສະເໜີບົດບັນທຶກຄວາມເຂົ້າໃຈຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ໃນການວາງນະໂຍບາຍໂດຍອີງໃສ່ຫຼັກຖານ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳ ໄດ້ຈັດຂຶ້ນເມື່ອວັນສຸກທີ 3 ຕຸລາຜ່ານມາ ທີ່ໂຮງແຮມສຸພັດຕຣາ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ສະພາແຫ່ງຊາດ (ສພຊ) ເຊິ່ງມີທ່ານ ນາງ ຄາລີອຸນໂກ ກັນບັດ (Khaliungoo Ganbat) ຮັກສາການຜູ້ຕາງໜ້າມູນນິທິເອເຊຍປະຈຳສປປລາວ, ຕາງໜ້າຈາກ 4 ກຳມາທິການຂອງ ສພຊ ຄື: ກົດໝາຍ; ເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ແຜນການ, ການເງິນແລະການກວດສອບ;ການຕ່າງປະເທດ ພ້ອມດ້ວຍຕາງໜ້າຈາກສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າຂອງສະພາແຫ່ງຊາດ, ກົມອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອນຳສະເໜີກ່ຽວກັບເນື້ອໃນຂອງບົດບັນທຶກຄວາມເຂົ້າໃຈ ແລະ ບັນດາກິດຈະກຳຂອງໂຄງການດັ່ງກ່າວໃຫ້ແກ່ຄູ່ຮ່ວມຈັດຕັ້ງປະຕິບັດ ໄດ້ຮັບຟັງ ແລະ ປະກອບຄຳເຫັນ ເພື່ອເຮັດໃຫ້ຮ່າງບົດບັນທຶກຄວາມເຂົ້າໃຈນີ້ສົມບູນຍິ່ງຂຶ້ນ.

ທ່ານ ນາງ ດາວເພັດ ສີຫາວົງ ກ່າວວ່າ: ໂຄງການໃໝ່ນີ້ ໄດ້ຮັບການສະໜັບສະໜູນຈາກກະຊວງການຕ່າງປະເທດ ແລະ ການຄ້າ ຂອງອົດສະຕຣາລີ, ໄລຍະເວລາຂອງໂຄງການແມ່ນ 1 ປີ; ຈຸດປະສົງສະເພາະຂອງໂຄງການແມ່ນເພື່ອຍົກສູງບົດບາດຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໂດຍສະເພາະແມ່ນວຽກງານຕິດຕາມກວດກາແລະການປັບປຸງນິຕິກຳທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ແລະ ຄັ້ງທີ X ໂດຍຜ່ານ 3 ກິດຈະກຳຄື: 1. ການສ້າງຄວາມສາມາດໃຫ້ແກ່ສສຊ ແລະ ສສຂ ທີ່ໄດ້ຮັບເລືອກຕັ້ງໃໝ່ໂດຍເນັ້ນໃສ່ຜູ້ຮັບຜິດຊອບວຽກງານທີ່ກ່ຽວພັນກັບກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ກຳມາທິການແຜນການ,ການເງິນແລະການກວດສອບ; 2. ສະໜັບສະ

ອ່ານຕໍ່ໜ້າ 12

# ສສຊ ປະຈຳເຂດເລືອກຕັ້ງ 1 ພົບປະຜູ້ມີສິດເລືອກຕັ້ງ




(ສພຂ) - ສະມາຊິກສະພາແຫ່ງຊາດ(ສສຊ)ປະຈະເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ລົງເຄື່ອນໄຫວ ພົບປະກັບຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ II ໃນວັນທີ 28 ສິງຫາ 2025 ທີ່ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ (ປກສ ນວ) ມີທ່ານ ພັທ. ຈັນທະລາ ອຸດົມສຸກ ສສຊ ຊຸທີ IX ປະຈຳເຂດເລືອກຕັ້ງທີ 1 ນວ ກຳມະການປະຈຳ ກຳມາທິການຍຸຕິທຳ ສະພາແຫ່ງຊາດ ທ່ານນາງ ວະລີ ເວດສະພົງ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 1 ນວ ຮອງປະທານສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ ທ່ານ ທະນົງສິດ ເມືອງຈັນ ສສຊ ຊຸທີ IX ປະຈຳເຂດເລືອກຕັ້ງທີ 1 ນວ ຫົວໜ້າພະແນກເຕັກໂນໂລຊີແລະການສື່ສານ ນວ ຕ້ອນຮັບໂດຍທ່ານ ພົວ. ບົວພັນ ຟອງມະນີ ຫົວໜ້າກອງບັນຊາການ ປກສ ນວ ມີນາຍ ແລະ ພົນຕຳຫຼວດເຂົ້າຮ່ວມ.

ທ່ານ ພົນຈັດຕະວາ ບົວພັນ ຟອງມະນີໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກພົນງານອັນພົ້ນເດັ່ນ ໃນຂະແໜງ ປກສ ນວ ໃນໄລໄຍະຜ່ານມາ ແລະທິດທາງໃນຕໍ່ໜ້າ ຈາກນັ້ນ ບັນດາ ສສຊ ກໍໄດ້ຜັດປ່ຽນກັນລາຍງານ ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸທີ IX ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2025 ຜ່ານມາສາມາດປະຕິບັດບັນດາຄາດໝາຍບັນລຸຜົນສຳເລັດໄດ້ຫຼາຍດ້ານ ເສດຖະກິດມະຫາພາກ ແຜນລາຍຮັບ ແຜນລາຍຈ່າຍງົບປະມານ ອັດຕາເງິນເຟີ້ ອັດຕາແລກປ່ຽນ ຄັງສຳຮອງເງິນຕາຕ່າງປະເທດ ການຄຸ້ມຄອງລາຍຮັບເງິນຕາ ຜ່ານລະບົບທະນາຄານ ແລະອື່ນໆ ພ້ອມນັ້ນກໍໄດ້ຍົກໃຫ້ເຫັນຜົນສຳເລັດຂອງກອງປະຊຸມສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ II ເຊິ່ງກອງປະຊຸມດັ່ງກ່າວໄດ້ຮັບຮອງເອົາບົດລາຍງານຂອງອົງການປົກຄອງ ນະຄອນຫຼວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານ 6 ເດືອນຕົ້ນປີ ຕິດພັນກັບການປະເມີນໂດຍສັງຂອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ການຈັດຕັ້ງປະຕິບັດ 8 ແຜນງານ 20 ໂຄງການລະດັບຊາດ ໂຄງການປີ່ນອ້ອມ ທີ່ກຳນົດໃນແຜນການ 5 ປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຂອງນະຄອນຫຼວງວຽງຈັນຮັບຮອງເອົາການສະເໜີປັບລາຄາຊົມໃຊ້ນ້ຳປະປາປີ 2025 ຂອງລັດວິສາຫະກິດນ້ຳປະປາ ຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງ ຮັບຮອງເອົາຮ່າງຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອ ຮັບຮອງເອົາບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະທິດທາງແຜນການ6ເດືອນທ້າຍປີ2025ຂອງສະພາປະຊາຊົນ ນວ ຊຸດທີ IV ຮັບຟັງການລາຍງານ ແລະ ຊີ້ແຈງບັນຫາສຳຄັນຕ່າງໆຂອງ ນວ ຮັບຟັງການຊີ້ແຈງບາງບັນຫາສຳຄັນຈຳນວນໜຶ່ງທີ່ຜູ້ແທນຊັກຖາມ.

ໂອກາດນີ້ຜູ້ເຂົ້າຮ່ວມກໍໄດ້ສະເໜີຫຼາຍບັນຫາຕໍ່ ສສຊ ເປັນຕົ້ນ ການກວດກາແລະແກ້ໄຂບັນຫາກ້ອງວົງຈອນ ປິດທີ່ບໍ່ສາມາດນຳໃຊ້ໄດ້ເຮັດໃຫ້ວຽກການແກ້ໄຂປະກົດການຫຍໍ້ທໍ້ພົບຄວາມຫຍຸ້ງຍາກຫຼາຍບັນຫາຄຳຕັດສິນຂອງສານທີ່ສານຕັດສິນແລ້ວການໄປພົວພັນເອົາຂອງເຈົ້າໜ້າທີ່ຍັງພົບຄວາມຫຍຸ້ງຍາກກົງກັນຂ້າມຖ້າຍາດຕິພີ່ນ້ອງໄປພົວພັນ ເອງພັດໄດ້ ສະເໜີໃຫ້ສານປະຊາຊົນໄດ້ພິຈາລະນາຄືນ ແລະ ເພີ່ມທະວີອຳນວຍຄວາມສະດວກໃນການສະໜອງຄຳຕັດສິນຂອງສານໃຫ້ເຈົ້າໜ້າທີ່ປກສ ຕື່ມອີກເນື່ອງຈາກມັນຕິດພັນກັບການປ່ອຍຕົວ ການເຄື່ອນຍ້າຍ ແລະ ການໄລ່ ອັດຕາກິນໃຫ້ນັກໂທດ ການຈັດສະຖານທີ່ຮອງຮັບເອົານັກໂທດທີ່ຈະໄປລໍຖ້າເອົາຜູ້ຕ້ອງຫາເຂົ້າ ໄປຕັດສິນຢູ່ບັນດາ ສຳນັກງານຂອງສານປະຊາຊົນ ເຫັນວ່າສະຖານທີ່ບໍ່ຮັບປະກັນ ບໍ່ມີບ່ອນຈອດລົດຄຸມຂັງທີ່ເໝາະສົມເນື່ອງຈາກການ ຈັດສັນບ່ອນຈອດລົດພະນັກງານກີດຂວາງບ່ອນຈອດລົດຂອງນັກໂທດເຮັດໃຫ້ການນຳເອົາຕົວນັກໂທດໄປພົບຄວາມຫຍຸ້ງຍາກການເກັບກຳຂໍ້ມູນຂອງນັກໂທດບາງຂໍ້ມູນກໍ່ຍັງບໍ່ທັນຈະແຈ້ງໂດຍສະເພາະແມ່ນການເອົາຂໍ້ມູນທີ່ມາຂອງຊັບສິນ ຜູ້ຕ້ອງຫາຂອງພາກສ່ວນສືບສວນສອບສວນ ແລະ ສານປະຊາຊົນຍັງບໍ່ທັນໄປລວງດຽວກັນ ການເກັບຄ່າປັບໄໝນຳນັກ ໂທດຍັງປະຕິບັດບໍ່ທັນໄດ້ດີ ແລະ ສະເໜີໃຫ້ສ້ອມແປງເສັ້ນທາງໄປຄ້າຍຊຸມຂັງນາໄຫນາໂນເປ່ເຜເຮັດໃຫ້ການສັນຈອນ ໄປມາພົບຄວາມຫຍຸ້ງຍາກ ແລະ ບັນຫາອື່ນໆອີກດ້ວຍ.



# ສພຂ ຕິດຕາມ, ຊຸກຍູ້ການກະກຽມ ແລະ ດຳເນີນກອງປະຊຸມທ້າຍສະໄໝການປັບປຸງກົງຈັກການຈັດຕັ້ງ

(ສພຂ) - ວັນທີ 1 ກັນຍາ ທີ່ສະໂມສອນເມືອງຜົ້ງສາລີ ກອງປະຊຸມຕິດຕາມ,ຊຸກຍູ້ການກະກຽມ ແລະ ດຳເນີນກອງປະຊຸມທ້າຍສະໄໝ,ການປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງຄະນະສະມາຊິກສະພາປະຊາຊົນແຂວງ (ສພຂ) ປະຈຳເມືອງ, ໂດຍການເປັນປະທານຂອງທ່ານ ສົມຈິດ ຫັບລະກອນ ກຳມະການປະຈຳພັກແຂວງ,ຮອງປະທານ ສພຂ; ເຂົ້າຮ່ວມມີເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ, ຮອງເລຂາພັກເມືອງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າຫ້ອງການຂັ້ນເມືອງ, ປະທານແນວລາວສ້າງຊາດເມືອງ; ອົງການການເມືອງ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ; ຫົວໜ້າອົງການລັດທຽບເທົ່າຫ້ອງການຂັ້ນເມືອງ.



ກອງປະຊຸມຕິດຕາມ, ຊຸກຍູ້ໃນຄັ້ງນີ້ ຈຸດປະສົງແມ່ນເປັນການຕິດຕາມ, ຊຸກຍູ້ການກະກຽມ ແລະ ດຳເນີນກອງປະຊຸມທ້າຍສະໄໝ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ ມີຄວາມຖືກຕ້ອງ, ສອດຄ່ອງຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ຮັບປະກັນໃນການກະກຽມການດຳເນີນກອງປະຊຸມມີຜົນສຳເລັດຕາມ ຄາດໝາຍທີ່ວາງໄວ້; ເຊິ່ງກອງປະຊຸມໄດ້ຈັດຕັ້ງເຜີຍແຜ່ ມະຕິ, ຄຳສັ່ງ, ຄຳແນະນຳ ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນ ຂອງສະພາປະຊາຊົນຂັ້ນແຂວງ ແລະ ການກະກຽມການເລືອກຕັ້ງ ສສຊ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຕິດພັນກັບການຜັນຂະຫຍາຍເນື້ອໃນແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ກ່ຽວກັບການກະກຽມຫ້ອງການເຮັດວຽກຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ຮັບຟັງການການລາຍງານ ແລະ ປະກອບຄຳເຫັນກ່ຽວກັບຄວາມພ້ອມແລະວິທີການຂອງການກະກຽມບົດລາຍງານສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງເມືອງ 5 ປີ ຜ່ານມາ (2019-2024) ແລະ ທິດທາງແຜນການ5ປີ(2024-2029) ຂອງເມືອງ ແລະການຈັດຕັ້ງປະຕິບັດ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການປົກຄອງເມືອງ;ການກະກຽມ ແລະ ດຳເນີນກອງປະຊຸມທ້າຍສະໄໝ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ.

ໃນຕອນທ້າຍປະທານກອງປະຊຸມໄດ້ມີບາງຄຳເຫັນຊີ້ນຳ ເພື່ອເປັນບ່ອນອີງໃຫ້ຄະນະ ສສຂ ປະຈຳເມືອງ ແລະອົງການປົກຄອງເມືອງນຳໄປຈັດຕັ້ງປະຕິບັດ ເປັນຕົ້ນແມ່ນສືບຕໍ່ນຳພາ-ຊີ້ນຳໃນການກະກຽມເນື້ອໃນຮອບດ້ານ ແລະດຳເນີນກອງປະຊຸມທ້າຍສະໄໝໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງຊີ້ນຳໃຫ້ອົງການປົກຄອງເມືອງສືບຕໍ່ກະກຽມຄວາມພ້ອມໃນການປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງກະກຽມຫ້ອງການເຮັດວຽກ, ການກຳນົດຈັດວາງບຸກຄະລາກອນ ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດເພື່ອເປັນເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ ໃນຊຸດທີ V.

**(ຄຳພອນ ໄຊຍະມານ)**

# ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຫຼວງນ້ຳທາປະຈຳເດືອນສິງຫາ 2025




(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ໄຂຂຶ້ນໃນວັນທີ 13 ສິງຫາຜ່ານມາ, ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ(ສພຂ)ຫຼວງນ້ຳທາ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງ,ມີບັນດາທ່ານກຳມະການຄະນະປະຈຳສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ລາຍງານຜົນການຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ປະຈຳເດືອນກໍລະກົດ ເຊິ່ງລວມມີ 3 ບົດບັກທຶກຄື ບົດບັນທຶກສະບັບເລກທີ 75/ຄປຈຂ ລົງວັນທີ 7 ກໍລະກົດ 2025; ບົດບັນທຶກສະບັບເລກທີ 76/ຄປຈຂ ລົງວັນທີ 15 ກໍລະກົດ 2025; ບົດບັນທຶກສະບັບເລກທີ 81/ຄປຈຂ, ລົງວັນທີ 21 ກໍລະກົດ 2025 ພ້ອມນັ້ນ ໄດ້ພິຈາລະນາ, ຄົ້ນຄວ້າໜັງສືສະເໜີຂອງເຈົ້າແຂວງ ສະບັບເລກທີ 83/ຈຂ ລົງວັນທີ 23 ກໍລະກົດ 2025 ກ່ຽວກັບການສະເໜີໃຫ້ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາຮັບຮອງເອົາຂໍ້ຕົກລົງ ຂອງ

ອ່ານຕໍ່ໜ້າ 6

# ສສຊ ແລະ ສສຂ ສາລະວັນ ເຜີຍແຜ່ກອງປະຊຸມສະໄໝສາມັນ



(ສພຂ) - ໃນວັນທີ 19 ກັນຍາຜ່ານມານີ້, ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ສິ່ງເວດລ້ອມແຂວງສາລະວັນ ທ່ານ ສີເຮັງ ທອມສິມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ທັງເປັນປະທານສະພາປະຊາຊົນແຂວງ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ສາລະວັນ ໄດ້ເຜີຍແຜ່ມະຕິກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີ IV; ເຂົ້າຮ່ວມຮັບຟັງມີພະແນກກະສິກຳ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການເງິນ, ພະແນກເຕັກໂນໂລຊີ ແລະ ການສື່ສານ, ພະແນກອຸດສາຫະກຳ ແລະການຄ້າ, ລັດວິສາກະກິດນ້ຳປະປາແຂວງສາລະວັນ, ລັດວິສາຫະກິດໄຟຟ້າສາຂາແຂວງສາລະວັນ ແລະ ທະນາຄານ ເຂົ້າຮ່ວມຮັບຟັງທັງໝົດ 150 ກວ່າທ່ານ.

ທ່ານ ສີວັນພະກອນ ວົງບຸນທັນ ກຳມະການພັກແຂວງ, ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ໄດ້ລາຍງານການເຄື່ອນໄຫວວຽກງານຂອງພະແນກກະສິກຳ ແລະ ສິ່ງເວດລ້ອມແຂວງ ໃນໄລຍະທີ່ຜ່ານມາໂດຍຫຍໍ້; ຈາກນັ້ນ, ທ່ານ ສີເຮັງ ທອມສິມບັດ ໄດ້ເຜີຍແຜ່ເນື້ອໃນມະຕິກອງປະຊຸມສະໄໝສາມັນເທື່ອທີ9 ຂອງສະພາແຫ່ງຊາດຊຸດທີ IX ທີ່ໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຫຼາຍບັນຫາ ເປັນຕົ້ນແມ່ນໄດ້ຮັບຮອງເອົານະໂຍບາຍຊຸກຍູ້ສົ່ງ ເສີມການກໍ່ສ້າງ ແລະ ສ້ອມແປງເສັ້ນທາງໃນໄລຍະໃໝ່, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ, ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີIX, ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສືບຕໍ່ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ IV ທີ່ໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຂອງແຂວງຫຼາຍບັນຫາ ເປັນຕົ້ນ ການເຜີຍແຜ່ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ, ພິຈາລະນາ ແລະ ຮັບຮອງເອົາຊື່ເອັ້ນປະທານ-ຮອງປະທານ ຄະນະກຳມະການປົກຄອງຂັ້ນເມືອງ ແລະ ແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 8 ເມືອງ, ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນະເສດຖະກິດ-ສັງຄົມ, ແຜນງົບປະມານຂອງອົງການປົກຄອງແຂວງ, ພິຈາລະນາຮັບຮອງການສ້າງນິຕິກຳທີ່ສຳຄັນຂອງແຂວງ ຈຳນວນ 3 ສະບັບ, ຮັບຮອງເອົາວຽກງານການເຄື່ອນໄຫວ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ IV.

ໃນວັນທີ 2 ກັນຍາ, ທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ, ຮອງປະທານສະພາປະຊາຊົນແຂວງ ແລະ ສສຂ ພ້ອມດ້ວຍຄະນະຕິດຕາມ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ IV ຢູ່ເມືອງລະຄອນເພັງ 2 ຈຸດຄື: ບ້ານນາດູ ແລະບ້ານປາກຕະປານ ພ້ອມທັງຕິດພັນກັບການມອບມະຕິກອງປະຊຸມຂອງສະພາປະຊາຊົນແຂວງວ່າດ້ວຍການພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງລະຄອນເພັງ.

ການລົງເຄື່ອນໄຫວໃນຄັ້ງນີ້, ໄດ້ຍົກໃຫ້ເຫັນເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນ ທີ່ໄດ້ຮັບຟັງການລາຍງານ, ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງຊາດ ແລະ ຂອງທ້ອງຖິ່ນ ເພື່ອເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງ; ຈາກນັ້ນ, ກໍໄດ້ຮັບຟັງການລາຍງານຈາກອົງການປົກຄອງເມືອງ, ບ້ານຕ່າງໆກ່ຽວກັບຜົນສຳ ເລັດຂອງການຈັດຕັ້ງປະຕິບັດວຽກງານໃນດ້ານຕ່າງໆ ໂດຍສະເພາະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ບັນຫາອື່ນໆ; ພ້ອມນັ້ນ, ໄດ້ຮັບຟັງຄຳສະເໜີ, ຄຳຄິດ-ຄຳເຫັນ, ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຊິ່ງຄຳສະເໜີສ່ວນໃຫຍ່ແມ່ນຕິດພັນກັບການດຳລົງຊີວິດຂອງປະຊາຊົນ ເປັນຕົ້ນແກ້ໄຂຊີວິດການເປັນຢູ່, ການພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍຕໍ່ຄູອາສາສະໝັກ, ບັນຫາການປະລະການຮຽນ, ນະໂຍບາຍເງິນອຸດໜູນຕໍ່ເລຂາພັກ-ນາຍບ້ານ, ພື້ນຖານໂຄງລ່າງ ແລະ ບັນຫາອື່ນໆ. ສສຊ ແລະ ສສຂ ກໍໄດ້ອະທິບາຍ ແລະ ຊີ້ແຈ້ງກັບທີ່ສ່ວນຄຳສະເໜີທີ່ຕິດພັນກັບຫຼາຍຂະແໜງການກອງເລຂາໄດ້ສັງລວມ ເພື່ອນຳໄປລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າພິຈາລະນາ ແລະ ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ.

**(ຈັນທີ ດວງປັນຍາ ແລະ ແສງວັນ)**




# ສະພາປະຊາຊົນແຂວງສາລະວັນ ເປີດກອງປະຊຸມສະໄໝວິສາມັນເທື່ອທີ 1




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ IV ໄດ້ເປີດຂຶ້ນຢ່າງເປັນທາງການ ໃນຕອນເຊົ້າຂອງມື້ວັນສຸກ ວັນທີ 26 ກັນຍາຜ່ານມາ, ທີ່ສະໂມສອນແຂວງສາລະວັນໂດຍການເປັນປະທານຂອງທ່ານ ສີເຮັງ ທອມສິມບັດ ປະທານສະພາປະຊາຊົນແຂວງສາລະວັນເຂົ້າຮ່ວມມີທ່ານປະເດີມພອນ ສິນທະນີ ຮອງເລຂາພັກແຂວງ; ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ການນຳຂັ້ນສູງຂອງແຂວງ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພະແນກການ, ອົງການລັດທຽບເທົ່າພະແນກການ, ເລຂາພັກເມືອງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງພ້ອມດ້ວຍແຂກຖືກເຊີນ.

ໃນພິທີ, ທ່ານ ສີເຮັງ ທອມສິມບັດ ໄດ້ກ່າວໄຂກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງສາລະວັນຊຸດທີIVຢ່າງເປັນທາງການ ເຊິ່ງທ່ານໄດ້ກ່າວວ່າ: ໂດຍປະຕິບັດຕາມມາດຕາ 56 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2024 ກ່ຽວກັບການດຳເນີນກອງປະຊຸມສະໄໝວິສາມັນຂອງສະພາປະຊາຊົນແຂວງສາລະວັນ ແລະ ທິດຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳພັກແຂວງ, ເພື່ອເສີມຂະຫຍາຍກົນໄກການເຄື່ອນໄຫວຂອງບັນດາອົງການອຳນາດລັດໃຫ້ເຂັ້ມແຂງ, ມີປະສິດທິພາບ ແລະ ສອດຄ່ອງກັບສະພາບການພັດທະນາ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃນເງື່ອນໄຂໃໝ່ ແລະ ຖືກຕ້ອງກັບລັດຖະທຳມູນແຫ່ງ ສປປລາວ (ສະບັບປັບປຸງປີ 2025) ວ່າດ້ວຍການແບ່ງຂັ້ນຄຸ້ມຄອງທ້ອງຖິ່ນ ອອກເປັນ 3 ຂັ້ນຄື: ຂັ້ນນະຄອນຫຼວງ-ແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ; ກອງປະຊຸມສະໄໝວິສາມັນເທື່ອທີ1 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ IV ແມ່ນຈະໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ພິຈະລະນາ ບັນຫາສຳຄັນຂອງແຂວງ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງປະທານຄະນະກຳມະການປົກຄອງແຂວງ;
2. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນຂອງອົງການປົກຄອງແຂວງ;
3. ພິຈາລະນາ, ຮັບຮອງເອົາການສ້າງຕັ້ງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ;
4. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງປະທານສານປະຊາຊົນແຂວງ ແລະ ຫົວໜ້າອົງການໄອຍາການແຂວງ;

ໃນຕອນທ້າຍ, ທ່ານຍັງໄດ້ກ່າວຕື່ມອີກວ່າ: ເພື່ອເຮັດໃຫ້ການພິຈາລະນາບັນດາເນື້ອໃນຕ່າງໆໃຫ້ມີຄຸນນະພາບ, ປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມຮຽກຮ້ອງມາຍັງບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງແລະບັນດາທ່ານສສຂ ຈົ່ງຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະປະກອບຄຳເຫັນຢ່າງມີປະຊາທິປະໄຕ, ເລິກເຊິ່ງ, ມີຈຸດສຸມ, ເຈາະຈີ້, ພາວະວິໄສ, ມີເຫດຜົນຕົວຈິງ ແລະ ຮັບປະກັນຄວາມສອດຄ່ອງກັບນະໂຍບາຍຂອງພັກ, ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ, ສະພາບຈຸດພິເສດຕົວຈິງຂອງແຂວງສາລະວັນໃນປະຈຸບັນ.

**(ຂ່າວ: ດີລຳພົນ ພົມມະຈັນ; ພາບ: ຈັນທີ ດວງປັນຍາ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 5)

ເຈົ້າແຂວງວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍໃຫ້ຜູ້ທີ່ຖືກຜົນກະທົບຈາກໂຄງການພັດທະນາກະສິກຳ, ອຸດສາຫະກຳ, ການບໍລິການ ແລະ ການທ່ອງທ່ຽວເຂດດ່ານປາງໄຮເມືອງສິງແຂວງຫຼວງນ້ຳທາ, ໄດ້ພິຈາລະນາ ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງສະບັບເລກທີ 92/ຈຂ ລົງວັນທີ 5 ສິງຫາ 2025 ກ່ຽວກັບການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນ 6 ເດືອນທ້າຍປີຂອງແຂວງ; ໄດ້ປຶກສາຫາລືຄົ້ນຄວ້າ ແຜນການຈັດຊື້ຈັດຈ້າງທີ່ຄະນະຮັບຜິດຊອບຮ່າງມາເພື່ອເອກະພາບກັນ; ໄດ້ຄົ້ນຄວ້າໜັງສືສະເໜີຂອງເລຂາທິການ ສະບັບເລກທີ 669/ຄລຂ ສພຂ ລົງວັນທີ 12 ສິງຫາ 2025 ກ່ຽວກັບການສະເໜີແປງພາຫະນະຈຳນວນໜຶ່ງ; ໄດ້ຄົ້ນຄວ້າພິຈາລະນາໜັງສືສະເໜີຂອງເຈົ້າແຂວງສະບັບເລກທີ106/ຈຂ ລົງວັນທີ 7 ສິງຫາ 2025 ກ່ຽວກັບການຮັບຮອງເອົາໂຄງການລົງທຶນຂອງລັດປະເພດ V ທີ່ມີມູນຄ່າ 50 ຕື້ກີບລົງມາ ຮ່ວງກອງທຶນວຽກງານບູລະນະຮັກສາ ແລະສ້ອມແປງທາງຫລວງແຫ່ງຊາດປີ 2025 ຮ່ວງ 20% 7 ໂຄງການ, ມູນຄ່າ 7,200 ລ້ານກີບ; ໄດ້ຄົ້ນຄວ້າພິຈາລະນາໜັງສືສະເໜີຂອງເຈົ້າແຂວງສະບັບເລກທີ 107/ຈຂ ລົງວັນທີ 7 ສິງຫາ 2025 ກ່ຽວກັບການຮັບຮອງເອົາໂຄງການລົງທຶນຂອງລັດປະເພດ V ທີ່ມີມູນຄ່າ 50 ຕື້ລົງມາ ຮ່ວງກອງທຶນທາງວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດປີ2025 ຮ່ວງ 80% 3 ໂຄງການ ມູນຄ່າ 23,238 ລ້ານກີບ ແລະ ຍັງໄດ້ຄົ້ນຄວ້າບັນຫາອື່ນໆຕາມການສະເໜີຂອງບັນດາກຳມະການປະຈຳສະພາປະຊາຊົນແຂວງ.

ຕອນທ້າຍປະທານກອງປະຊຸມໄດ້ມີຄຳເຫັນເນັ້ນໜັກໃຫ້ບັນດາຄະນະກຳມະການ, ຄະນະເລຂາທິການຈົ່ງເອົາ ໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂອງກອງປະຊຸມຄັ້ງນີ້ໃຫ້ສຳເລັດພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດໃນກອງປະ ຊຸມຄະນະປະຈຳ ປະຈຳເດືອນຕຸລາ 2025.

**(ນາງ ອຳພອນ ສີປະເສີດ)**



## ສ້າງຄວາມຮັບຮູ້...

(ຕໍ່ຈາກໜ້າ 1)

ຫຼວງນໍ້າທາ ແລະ ແຂວງອຸດົມໄຊ; ທີ່ຫ້ອງປະຊຸມຂອງ ສພຂ ຫຼວງນໍ້າທາ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແລະ ທີ່ຫ້ອງປະຊຸມຫ້ອງວ່າການແຂວງອຸດົມໄຊ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງອຸດົມໄຊ, ບັນດາທ່ານຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານສຳມະນາກອນ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງການເຝິກອົບຮົມຄັ້ງນີ້ແມ່ນເພື່ອເຜີຍແຜ່, ໂຄສະນາກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວ ໃຫ້ມີຄວາມເລິກເຊິ່ງ; ເປັນການຊຸກຍູ້, ແນະນຳແລະສ້າງຄວາມເປັນເອກະພາບ ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງ ສພຂ, ການກະກຽມໃຫ້ແກ່ການດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ທັງເປັນຂໍ້ມູນ, ບ່ອນອີງ ໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປ ໃຫ້ເປັນລະບົບ, ມີຄວາມເປັນເອກະພາບ ແລະສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກເວົ້າລວມ ໂດຍສະເພາະການຍົກສູງບົດບາດຂອງສະພາໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ ຊຸດຕໍ່ໄປ ຕາມເນື້ອໃນຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ.ສພຊ ລົງວັນທີ 26 ສິງຫາ 2025. ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດເຫັນຕໍ່ວຽກງານດັ່ງກ່າວ ດ້ວຍບັນຍາກາດຟົດຟື້ນ ໂດຍສະເພາະວຽກງານການປະຕິບັດນະໂຍບາຍ, ກົນໄກການປະສານງານລະຫວ່າງ ສພຂ ກັບອົງການປົກຄອງແຂວງ, ບາດກ້າວຂັ້ນຕອນການຈັດຕັ້ງປະຕິບັດພາລະບົດບາດຂອງ ສສຂ ປະຈຳເຂດເລືອກຕັ້ງເມືອງ, ດ້ານໂຄງປະກອບບຸກຄະລາກອນ ແລະອື່ນໆ; ທັງນີ້, ກໍເພື່ອເຮັດໃຫ້ສຳມະນາກອນໄດ້ຮັບຮູ້, ເຊື່ອມຊຶມ ແລະ ເຂົ້າໃຈຢ່າງເລິກເຊິ່ງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານສົມທົບຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີແລະການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ເຊກາ) ໄລຍະ II.





## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ແລະ ສພຂ 4 ແຂວງພາກກາງ ຄື: ນະຄອນຫຼວງວຽງຈັນ, ວຽງຈັນ, ບໍລິຄຳໄຊ ແລະ ໄຊສົມບູນ ລວມຜູ້ເຂົ້າຮ່ວມທັງໝົດ 57 ທ່ານ, ຍິງ 19 ທ່ານ.

ກອງປະຊຸມໄດ້ເຜີຍແຜ່ມະຕິວ່າດ້ວຍການເຄື່ອນໄຫວວຽກງານສາຍດ່ວນຂອງສະພາແຫ່ງຊາດ ແລະ ສະເໜີບົດກ່ຽວກັບຄວາມຮູ້ພື້ນຖານ, ຄວາມໝາຍ, ຄວາມສຳຄັນ ແລະ ສະພາບການຈັດຕັ້ງປະຕິບັດວຽກງານສາຍດ່ວນ; ທັກສະໃນການຮັບ ແລະ ສັງລວມເນື້ອໃນສາຍດ່ວນ; ວິທີການກວດກາເນື້ອໃນ, ການຈັດພິມ ແລະ ການແຍກຂົງເຂດ; ວິທີສັງລວມ, ລາຍງານເນື້ອໃນການແຈ້ງຕອບຄຳສະເໜີຂອງປະຊາຊົນ; ສະພາບການຈັດຕັ້ງປະຕິບັດວຽກງານສາຍດ່ວນຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການກວດກາແຫ່ງລັດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າ, ປະກອບຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນຮ່ວມກັນຢ່າງເລິກເຊິ່ງ, ກົງໄປກົງມາ, ມີເຫດມີຜົນ, ຍົກໃຫ້ເຫັນການຈັດຕັ້ງປະຕິບັດຕົວຈິງ ເພື່ອຊອກຫາວິທີການ ແລະ ມາດຕະການແກ້ໄຂໃຫ້ດີຂຶ້ນ ແນໃສ່ເຮັດໃຫ້ການແລກປ່ຽນບົດຮຽນ ສາມາດໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານສາຍດ່ວນຂອງ ສພຊ ໃນຕໍ່ໜ້າ ໃຫ້ດີຂຶ້ນກວ່າເກົ່າ ທັງເປັນການເພີ່ມທະວີແລະຍົກສູງຄຸນນະພາບໃຫ້ແກ່ພະນັກງານຜູ້ຮັບຜິດຊອບວຽກງານສາຍດ່ວນ ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນເອກະພາບກັນໃນຂອດການຈັດຕັ້ງປະຕິບັດວຽກງານຕົວຈິງ ໂດຍສະເພາະກ່ຽວກັບຂັ້ນຕອນ, ວິທີການຮັບສາຍ (ສາຍດ່ວນ 156), ການບັນທຶກ-ສັງລວມເນື້ອໃນ ແລະ ການໄຈ້ແຍກຂົງເຂດຕາມບັນດາຄຳສະເໜີຂອງປະຊາຊົນ, ນິຕິບຸກຄົນຫຼືການຈັດຕັ້ງເພື່ອສະໜອງຂໍ້ມູນດັ່ງກ່າວ ໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອພິຈາລະນາ, ແກ້ໄຂໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ໃຫ້ສຳເລັດທັນກຳນົດເວລາ ແລະ ມີຄວາມຍຸຕິທຳ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ.

ນອກຈາກນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລືກ່ຽວກັບການຮັບ-ສັງລວມຄຳສະເໜີຂອງປະຊາຊົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ສາມາດສະເໜີບັນຫາ ຫຼື ຄຳຄິດເຫັນຂອງຕົນ ຜ່ານສື່ອອນລາຍທາງການຂອງສະພາແຫ່ງຊາດເຊັ່ນ: ອີເມວ (Email: nalao.156@gmail.com) ແລະ ແອັບພລິເຄຊັນ (Application: Lao NA) ໃຫ້ດີຂຶ້ນກວ່າເກົ່າ.

ທ່ານປະທານກອງປະຊຸມໃຫ້ຮູ້ວ່າ: ວຽກງານສາຍດ່ວນ ເປັນວຽກງານທີ່ສຳຄັນ ເຊິ່ງໄດ້ເລີ່ມຮັບສາຍດ່ວນຄັ້ງທຳອິດ ຕັ້ງແຕ່ສະພາແຫ່ງຊາດ ຊຸດທີ V, ນິຕິກຳຕ່າງໆກ່ຽວກັບວຽກງານສາຍດ່ວນ ບໍ່ທັນມີອັນສະເພາະ ມີແຕ່ອີງຕາມທິດຊີ້ນຳຂອງຂັ້ນເທິງ; ມາເຖິງທ້າຍສະໄໝຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າ, ພິຈາລະນາ ອອກມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການເຄື່ອນໄຫວວຽກງານສາຍດ່ວນຂອງສະພາແຫ່ງຊາດ ສະບັບເລກທີ 167/ຄປຈ, ລົງວັນທີ 06 ມິຖຸນາ 2025 ເຊິ່ງຖືວ່າເປັນນິຕິກຳທີ່ສຳຄັນໃນການເຄື່ອນໄຫວວຽກງານສາຍດ່ວນຂອງສະພາແຫ່ງຊາດກໍຄືການຮັບຄຳສະເໜີຂອງປະຊາຊົນ, ການຈັດຕັ້ງ ຫຼື ນິຕິບຸກຄົນຜ່ານທາງໂທລະສັບສາຍດ່ວນ 156 ແລະ ສື່ອອນລາຍທາງການຂອງສະພາແຫ່ງຊາດ ກ່ຽວກັບບັນຫາເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍຸຕິທຳ ແລະ ການປະຕິບັດສິດ, ໜ້າທີ່ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ. ວຽກງານສາຍດ່ວນແມ່ນຄວາມຮັບຜິດຊອບຂອງຄະນະເລຂາທິການສະພາແຫ່ງຊາດ ນຳພາ-ຊີ້ນຳກົມກວດກາເປັນເສນາທິການໃນການປະຕິບັດວຽກງານດັ່ງກ່າວ ໃນໄລຍະການດຳເນີນກອງປະຊຸມສະພາແຫ່ງຊາດ, ພາຍຫຼັງສຳເລັດກອງປະຊຸມກໍໄດ້ຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ແລະ ຕິດຕາມເອົາຜົນຂອງການແກ້ໄຂລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ; ພ້ອມນັ້ນ, ບັນດາກຳມາທິການ, ສະຖາບັນຄົ້ນຄວ້ານິຕິກຳແລະບັນດາກົມທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດກໍເປັນສ່ວນໜຶ່ງທີ່ສຳຄັນໃນການຕິດຕາມ ແລະ ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ, ແກ້ໄຂ ບັນດາຄຳສະເໜີຂອງປະຊາຊົນ ທີ່ສະເໜີຜ່ານສາຍດ່ວນຂອງສະພາແຫ່ງຊາດໃນແຕ່ລະໄລຍະ.

ກອງປະຊຸມຄັ້ງນີ້ຍັງໄດ້ຮັບຟັງການໂອ້ລົມຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເຊິ່ງທ່ານໄດ້ເນັ້ນໃຫ້ກົມກວດກາ ແລະ ພະນັກງານຮັບສາຍດ່ວນ ຕ້ອງໄດ້ເພີ່ມທະວີຄວາມຮັບຜິດຊອບຂອງຕົນຕໍ່ກັບວຽກງານສາຍດ່ວນ ເປັນຕົ້ນ: 1) ການຮັບໂທລະສັບຫຼືຄຳສະເໜີຕ້ອງຕັ້ງໃຈຟັງໃຫ້ໄດ້ເນື້ອໃນໃຈຄວາມ, ຈົດບັນທຶກ, ວິເຄາະວິໄຈ-ໄຈ້ແຍກ, ສັງລວມເນື້ອໃນຕ່າງໆ ຕ້ອງຮັບປະກັນຄວາມຖືກຕ້ອງ, ຊັດເຈນ, ຄົບຖ້ວນ ລວມທັງການເກັບຂໍ້ມູນພື້ນຖານເຊັ່ນ: ຊື່ ແລະນາມສະກຸນ, ອາຊີບ, ບ້ານ, ເມືອງ, ແຂວງ, ເບີໂທລະສັບຂອງຜູ້ສະເໜີ; 2) ບັນທຶກຂໍ້ມູນໃຫ້ລະອຽດຈະແຈ້ງ, ຖ້າສັງລວມຂໍ້ມູນບໍ່ຄົບຖ້ວນເຊັ່ນ: ສະຖານທີ່, ເຫດການທີ່ສະເໜີໃຫ້ແກ້ໄຂຍັງບໍ່ທັນໄດ້ບັນທຶກຈະແຈ້ງ ຕ້ອງໄດ້ປະສານສົມທົບເກັບຂໍ້ມູນຕື່ມກັບຜູ້ສະເໜີ ແລ້ວສັງລວມເນື້ອໃນຄືນເພື່ອລາຍງານຂໍທິດຊີ້ນຳ; 3) ບັນຫາທີ່ສຳຄັນ ຕ້ອງຮັກສາຄວາມລັບກ່ຽວກັບຂໍ້ມູນຂອງປະຊາຊົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຜ່ານໂທລະສັບສາຍດ່ວນເພື່ອປົກປ້ອງສິດ, ຜົນປະໂຫຍດ ແລະ ຄວາມປອດໄພຂອງຜູ້ສະເໜີ; 4) ເພີ່ມທະວີການປະສານງານກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດຜົນການແກ້ໄຂຄຳສະເໜີຂອງພາກສ່ວນທີ່ໄດ້ຮັບຄຳສະເໜີ, ມີການສະຫຼຸບ, ລາຍງານ ເປັນແຕ່ລະອາທິດ, ແຕ່ລະເດືອນ ແຕ່ລະໄລຍະໃຫ້ຂັ້ນເທິງເປັນປົກກະຕິ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຫຼື ເຊກາ ໄລຍະທີ II (CEGGA II) ຈັດຕັ້ງປະຕິບັດໂດຍອົງການເຮວວິຕັດ (HELVETAS) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.






# ກ້ຽງນອກ ເນົ່າໃນ

# ດົ້ນກົບເມກ

ຜູ້ຂຽນເຄີຍໄດ້ຍິນສຳນວນບູຮານສອນວ່າ: ກ້ຽງຂ້າງນອກທາງໃນເປັນໝາກເດື່ອ, ກ້ຽງປາກບັ້ງຂັງຂໍ້ເນົ່າໃນ; ພຶດຕິກຳຂອງຄົນເຮົາ ຖ້າໃຜຮູ້ຈັກສັງເກດເບິ່ງທຽບໃສ່ຄຳເວົ້າຈາ ຜູ້ເວົ້າດີເວົ້າມ່ວນ ບາງເທື່ອການເຮັດຕົວຈິງຜິດບໍ່ສອດຄ່ອງກັບສິ່ງທີ່ເວົ້າ ສິ່ງທີ່ເອີ່ຍປາກສອນຄົນ ເຊິ່ງຖ້າໃຜຫຼົງກັບຄຳເວົ້າມ່ວນ, ເວົ້າໃຫ້ຖືກໃຈ ແຕ່ບໍ່ຖືກລະບຽບ ມັນກໍກາຍເປັນຄ່ານິຍົມປອມໆທຽມໆ ຫຼອກກັນລະຫວ່າງຄົນກັບຄົນ, ບາງຄົນກ້າສອນຄົນອື່ນໃຫ້ເສຍສະຫຼະ ແຕ່ພຶດຕິກຳຕົນເອງຜັດມີແຕ່ເອົາກັບເອົາ.

ຜູ້ຂຽນຄິດເຫັນພະບາງອົງທີ່ເວລາໄປສູດບ້ານ ເວລາຖືກນິມົນເທດ ກໍເວົ້າແຕ່ເລື່ອງການໃຫ້ທານ, ເທດແຕ່ເລື່ອງເສຍສະຫຼະ ແຕ່ເວລາກັບເຂົ້າກຸດຕິໃນວັດ ຜັດເຕັມແຕ່ວັດຖຸສິ່ງຂອງບໍ່ເຄີຍແບ່ງປັນໃຫ້ຈົວນ້ອຍຜູ້ຂາດເຂີນ, ພຶດຕິກຳລັກສະນະນີ້ ກໍເຂົ້າທຳນອງກ້ຽງແຕ່ນອກທາງໃນເປັນໝາກເດື່ອ ເມື່ອຄຳເວົ້າກັບພຶດຕິກຳບໍ່ສອດຄ່ອງ ຄວາມເຊື່ອຖື (ສັດທາ) ກໍຫຼຸດລົງ, ຖ້າທຽບໃສ່ຜູ້ນຳໃນອົງກອນໃດໜຶ່ງ ລູກນ້ອງກໍໝົດສັດທາ ເພາະຄຳເວົ້າມ່ວນໆຫູດີງາມ ແຕ່ການກະທຳໄປຄົນລະທາງ; ຄົນບູຮານນັ້ນສະຫຼາດ ຈຶ່ງຍົກເອົາໝາກເດື່ອ ທີ່ເປັນໝາກໄມ້ທຳມະຊາດ ເວລາສຸກແດງສີງາມ ເວລາບິເບິ່ງຂ້າງໃນມີແຕ່ແມງໄມ້, ຈະກິນກໍຍາກເພາະມັນມີເນື້ອເນົ່າບູດ.

ຄຳພັງເພີຍເລື່ອງກ້ຽງແຕ່ນອກທາງໃນເປັນໝາກເດື່ອນີ້ ມັນຖືກນຳມາສອນສະເພາະຊີ້ບອກພຶດຕິກຳກັບຄຳເວົ້າໃຫ້ສົມທຽບໃສ່ກັນວ່າ ບຸກຄົນທີ່ເວົ້າອອກມາແນວໃດ ພຶດຕິກຳເຂົາຈະເປັນໄປຕາມທີ່ໄດ້ເວົ້ານັ້ນ ຫຼື ບໍ່? ຄິດເຫັນປາກົດການລາຍງານດອກໄມ້ທີ່ສັງຄົມຮັບຮູ້ນຳກັນ ອັນໃດກໍດີໝົດສູ່ຢ່າງທີ່ຂຽນໄວ້ໃນລາຍງານ, ແຕ່ສະພາບຕົວຈິງບໍ່ເປັນແບບນັ້ນ; ຜູ້ເປັນຫົວໜ້າບາງໜ່ວຍງານ ເມື່ອໄດ້ຮັບຕຳແໜ່ງໃໝ່ກໍບໍ່ສົນໃຈປະຕິບັດຕາມກົດ, ແຕ່ປະຕິບັດຕາມໃຈ ຄືໃຜເວົ້າຖືກໃຈ ກໍຕົກລົງໃຫ້ຜູ້ນັ້ນໂລດ.

ສັງລວມໄດ້ວ່າ ຖ້າເຮົາຍັງເລືອກ ຫຼື ປະຕິບັດຄ່ານິຍົມກ້ຽງນອກເນົ່າໃນນັ້ນ ມັນອັນຕະລາຍຄືກັບພະຍາດປົວບໍ່ເຊົາຊ້ຳເຮື້ອຍາວນານ, ເວົ້າສະເພາະຄົນປາກກ້ຽງໃຈສົ້ມດັ່ງໝາກນາວ! ສະເໜີເປັນຂໍ້ຄິດ.






## ສອງສະມາຄົມ...

(ຕໍ່ຈາກໜ້າ 1)

ທ່ານ ຄຳໃບ ດຳລັດ ໄດ້ກ່າວວ່າ: ການພົວພັນຮ່ວມມືລະຫວ່າງສອງສະມາຄົມມິດຕະພາບລາວ-ກຳປູເຈຍ, ກຳປູເຈຍ-ລາວ ຍັງສືບຕໍ່ມີບາດກ້າວຂະຫຍາຍຕົວ ແລະໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ; ການພົບປະຄັ້ງນີ້ ຖືເປັນການປະຕິບັດກົນໄກພົບປະແລກປ່ຽນ ແລະ ພ້ອມກັນຕີລາຄາຄືນການຈັດຕັ້ງປະຕິບັດການພົວພັນຮ່ວມມືຂອງສອງສະມາຄົມໃນໄລຍະຜ່ານມາ ແລະ ປຶກສາຫາລືແຜນການ ແລະກິດຈະກຳໃນຕໍ່ໜ້າ ເພື່ອເຮັດໃຫ້ການພົວພັນຮ່ວມມືລະຫວ່າງສອງສະມາຄົມ ມີຫຼາຍສີສັນ, ຫຼາຍຮູບແບບ ທັງມີປະສິດທິພາບຂຶ້ນຕື່ມ. ການພົວພັນຮ່ວມມືຂອງສອງຝ່າຍ ຍັງຮັກສາໄດ້ກົນໄກການປະສານງານພົບປະແລກປ່ຽນກັນຢ່າງປົກກະຕິ ແລະ ຕໍ່ເນື່ອງຕະຫຼອດມາ; ມີກົນໄກການແລກປ່ຽນຂໍ້ມູນຂ່າວສານ, ຊຸກຍູ້ສົ່ງເສີມ ແລະ ສະໜັບສະໜູນການພົວພັນຮ່ວມມື, ໄປມາຫາສູ່ກັນລະຫວ່າງປະຊາຊົນຕາມເຂດຊາຍແດນ; ສະໜັບສະໜູນການຮ່ວມມືດ້ານວຽກງານປ້ອງກັນຄວາມສະຫງົບ-ຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນ, ດ້ານເສດຖະກິດ-ການຄ້າ, ການລົງທຶນ, ການທ່ອງທ່ຽວ, ສຶກສາ-ສາທາລະນະສຸກແລະອື່ນໆຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ເພື່ອຜົນປະໂຫຍດຂອງປະເທດ ແລະ ປະຊາຊົນສອງຊາດ.

ສອງຝ່າຍສະເໜີໃຫ້ສືບຕໍ່ກົນໄກການປະສານງານ, ແລກປ່ຽນຂໍ້ມູນຂ່າວສານແລະແລກປ່ຽນການຢ້ຽມຢາມໄປມາຫາສູ່ກັນໃຫ້ເປັນປົກກະຕິລະຫວ່າງສອງສະມາຄົມມິດຕະພາບລາວ-ກຳປູເຈຍ, ກຳປູເຈຍ-ລາວ; ຊຸກຍູ້ບັນດາສະມາຄົມຂັ້ນແຂວງ, ປະຊາຊາຊົນຕາມເຂດຊາຍແດນໃຫ້ໄປມາຫາສູ່, ສ້າງກິດຈະກຳຮ່ວມກັນເຊັ່ນ: ການແລກປ່ຽນສິລະປະ, ວັດທະນະທຳ, ກິລາມິດຕະພາບ, ການທ່ອງທ່ຽວ; ປະສານງານ, ຊຸກຍູ້ ແລະ ເປັນຂົວຕໍ່ສ້າງກິດຈະກຳໃຫ້ແກ່ຂະບວນການຊາວໜຸ່ມ, ນັກສຶກສາ ໃນການທັດສະນະສຶກສາເພື່ອຄົ້ນຄວ້າ ແລະ ສຶກສາກ່ຽວກັບສາຍພົວພັນມິດຕະພາບຂອງສອງຊາດເພື່ອເປັນການປູກຈິດສຳນຶກໃຫ້ຄົນຮຸ່ນໃໝ່ໄດ້ເຂົ້າໃຈແຈ້ງເລິກເຊິ່ງ, ເປັນເຈົ້າການສືບທອດມູນເຊື້ອອັນດີງາມຂອງສອງຊາດ; ຊຸກຍູ້ບັນດານັກທຸລະກິດລາວ ແລະກຳປູເຈຍສ້າງການຄ້າຊາຍແດນລະຫວ່າງ ລາວ-ກຳປູເຈຍ; ປຶກສາຫາລືແລະເປັນເອກະພາບກັນເພື່ອເຮັດໃຫ້ການເຄື່ອນໄຫວຂອງສະມາຄົມມິດຕະພາບ ຮັບປະກັນໄດ້ທັງດ້ານເນື້ອໃນ, ຮູບການ ແລະ ເປັນຂະບວນຟົດຟື້ນ ປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ລາວ-ກຳປູເຈຍ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ.

## ສ້າງຄວາມຮັບຮູ້...

(ຕໍ່ຈາກໜ້າ 1)

ເອກະພາບ ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມໃຫ້ແກ່ການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V ທັງເປັນຂໍ້ມູນ, ບ່ອນອີງໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປ ເປັນລະບົບ, ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກ ເວົ້າລວມ, ເວົ້າສະເພາະແມ່ນການຍົກສູງບົດບາດຂອງສະພາ ໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ໄດ້ສະເໜີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຊຸດຕໍ່ໄປຕາມເນື້ອໃນຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ.ສພຊ, ລົງວັນທີ 26 ສິງຫາ 2025; ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນຕໍ່ວຽກງານດັ່ງກ່າວ ໂດຍສະເພາະດ້ານກົນໄກການປະສານງານລະຫວ່າງ ສພຂ ກັບອົງການປົກຄອງແຂວງ, ບາດກ້າວຂັ້ນຕອນການຈັດຕັ້ງປະຕິບັດພາລະບົດບາດຂອງສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ, ດ້ານໂຄງປະກອບບຸກຄະລາກອນ ແລະ ອື່ນໆ. ທັງນີ້, ກໍເພື່ອເພີ່ມຄວາມຮັບຮູ້ ແລະເຂົ້າໃຈຢ່າງຖືກຕ້ອງໃຫ້ແກ່ອົງການຈັດຕັ້ງລັດຂັ້ນທ້ອງຖິ່ນ ແລະ ຂະ ແໜງການທີ່ກ່ຽວຂ້ອງ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ ແລະ ມີຜົນສຳເລັດ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານສົມທົບຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຫຼື ເຊກາ ໄລຍະ II (CEGGA II).




## ທ່ານ ພົທ. ສຸວອນ...

(ຕໍ່ຈາກໜ້າ 1)

ວຽກງານຢູ່ສະພາປະຊາຊົນແຂວງອຸດົມໄຊ ໂດຍການຕ້ອນຮັບຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ), ມີບັນດາທ່ານຮອງປະທານ ແລະ ກຳມະການ ຄປຈສພຂ, ຄະນະເລຂາທິການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ການເຄື່ອນໄຫວວຽກງານຄັ້ງນີ້ ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງໃນໄລຍະຜ່ານມາ, ການປັບປຸງກົງຈັກການຈັດຕັ້ງຂອງ ສພຂ ແລະ ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ການພິຈາລະນາຮັບຮອງເອົາບຸກຄະລາກອນຂອງຄະນະກຳມະການປົກຄອງແຂວງ, ເມືອງແລະການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຊຸດທີV; ພ້ອມດຽວກັນ, ກໍໄດ້ມີຄຳເຫັນປຶກສາລືກັນຢ່າງເລິກເຊິ່ງ ແລະ ກົງໄປກົງມາ ໃນການຈັດຕັ້ງປະຕິບັດບັນດາວຽກງານດັ່ງກ່າວ ເຊິ່ງມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຊອກວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ມີຄວາມເຂັ້ມແຂງ, ຖືກຕ້ອງສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ດຳເນີນໄປຢ່າງຖືກຕ້ອງຕາມແນວທາງຂອງພັກ, ໃຫ້ເປັນລະບົບ ເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກເວົ້າລວມ ເວົ້າສະເພາະການຍົກສູງບົດບາດຂອງ ສພຂ ໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

# ພຶດຕິກຳການໃຊ້ຄຳຫຍາບຂອງເດັກໃນສື່ອອນລາຍ

# ຮຽບຮຽງໂດຍ: ທິວກະທິ



## ສຸກສະບາຍຫາຍໂຣຄ



ການໃຊ້ຄຳບໍ່ສຸພາບ ຫຼື ຄຳຫຍາບຂອງເດັກ ອາດເປັນບັນຫາທີ່ຄູ ຫຼື ພໍ່ແມ່ຜູ້ປົກຄອງອາດກຳລັງວິຕົກກັງວົນ ໂດຍບໍ່ເຂົ້າໃຈເຖິງສາເຫດ ແລະ ວິທີປ້ອງກັນ ຫຼື ແກ້ໄຂ ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມາສຶກສາ ແລະ ຮຽນຮູ້ນຳກັນເບິ່ງວ່າ ມັນເກີດມາຈາກສາເຫດໃດ ແລະ ມີວິທີທາງແກ້ໄຂ ປ້ອງກັນຄືແນວໃດ.

ໃນການໃຊ້ຊີວິດໃນປັດຈຸບັນເຮົາຕ້ອງຍອມຮັບກ່ອນວ່າສື່ອອນລາຍເປັນປັດໄຈໜຶ່ງທີ່ມີບົດບາດສຳຄັນສັງຄົມໃນປັດຈຸບັນ ບໍ່ວ່າຈະເປັນເດັກນ້ອຍ ຫຼື ຜູ້ໃຫຍ່ ແລະ ມັນກໍເປັນປັດໄຈໜຶ່ງທີ່ມີອິດທິພົນເຮັດໃຫ້ເດັກເກີດການຮຽນແບບການໃຊ້ຄຳບໍ່ສຸພາບ ເພາະເດັກຄິດວ່າການໃຊ້ຄຳບໍ່ສຸພາບລະຫວ່າງໝູ່ເພື່ອນມັນບໍ່ແມ່ນເລື່ອງທີ່ຜິດ ແລະ ກໍເປັນທີ່ຍອມຮັບເມື່ອເວົ້າ ຫຼື ທັກທ້ວງກັນອອກມາເປັນຄຳຫຍາບຄືກັນ.

ກ່ອນອື່ນໝົດພໍ່ແມ່ຄວນເຂົ້າໃຈວ່າຄຳຫຍາບເປັນພຶດຕິກຳຕາມໄວອາຍຸຂອງເດັກນ້ອຍ ເຊິ່ງອາດຈະຮຽນແບບຈາກໝູ່ເພື່ອນ ຫຼື ຜູ້ມີອິດທິພົນໃນສື່ອອນລາຍ; ສະນັ້ນ, ລອງຫາໂອກາດສົນທະນາເຖິງຂໍ້ດີ ແລະ ຂໍ້ເສຍ ຂອງການໃຊ້ຄຳຫຍາບ ແລະ ແນະນຳໃຫ້ເດັກເຂົ້າໃຈວ່າ ສາມາດໄດ້ຮັບການຍອມຮັບຈາກຄົນອື່ນໄດ້ໂດຍບໍ່ມີຄຳຫຍາບ, ສະມາຊິກໃນຄອບຄົວຄວນເປັນຕົວຢ່າງທີ່ດີໃນການໃຊ້ຄຳສັບທີ່ເໝາະສົມໃນທຸກໆອະລິຍະບົດ, ພໍ່ແມ່ຄວນຊົມເຊີຍເມື່ອລູກໃຊ້ພາສາທີ່ເໝາະສົມ ໂດຍບໍ່ມີຄຳຫຍາບໃນສື່ອອນລາຍ, ຫຼຸດຜ່ອນການໃຊ້ສື່ອອນລາຍທີ່ມີເນື້ອໃນບໍ່ເໝາະສົມກັບອາຍຸຂອງເດັກນ້ອຍ ໂດຍສະເພາະຄວາມຮຸນແຮງ ແລະ ການໃຊ້ສັບພາສາ; ແນະນຳສື່ອອນລາຍ ຫຼື ຜູ້ທີ່ມີອິດທິພົນ (ເນັດໄອດໍ້) ທີ່ໃຊ້ຄຳຖືກຕ້ອງເໝາະສົມ; ຕັກເຕືອນເມື່ອມີການໂພສຂໍ້ຄວາມດ້ວຍຄຳເວົ້າທີ່ຫຍາບຄາຍເມື່ອເດັກນ້ອຍໃຈຮ້າຍ ຫຼື ບໍ່ພໍໃຈ ແລະ ອະທິບາຍໃຫ້ເດັກຮູ້ວ່າຂໍ້ຄວາມດັ່ງກ່າວຈະຢູ່ໃນອອນລາຍ ແລະອາດຈະມີຜົນກະທົບທາງລົບຕໍ່ກັບໂຕເຂົາໃນອະນາຄົດ.

www.sanook.com




## ຄິດເຖິງ “ຄູ”

(ເນື່ອງໃນໂອກາດວັນຄູແຫ່ງຊາດ 7 ຕຸລາ)

# ອຈ. ວຽງວິໄລ ທ່ຽງຈັນໄຊ

ຄິດເຖິງເມື່ອຄັ້ງ ຄາວສອນຢູ່ ມຊ
ເປັນເວລາພໍສົມຄວນ ສັ່ງສອນສິດກ້າວ
ບອກແລວທາງສິດແຈ້ງ ວິຊາການຫຼາຍຢ່າງ
ເປັນນັກປາດຮອບຮູ້ ເຫັນແຈ້ງແຫ່ງວິຊາ

ໃຜແດ່ ຍັງຈຳຈື່ໄດ້ “ຄູ” ເດັ່ນແນວໃດ
ໃຜວ່າ ຍັງສຳຄັນ ຄ່າຄວນຫວນຮູ້
ຫາກບໍ່ມີ “ຄູ” ສອນຊີ້ ມີຫຼືສິດຊິເຖິງຝັ່ງ
“ຄູ” ເປັນດັ່ງເຮືອຮັບຈ້າງ ພາສິດກ້າວສູ່ຄວາມຈະເລີນ ນັ້ນແລ້ວ!

ຊື່ “ຄູ” ຄືຜູ້ຮອບຮູ້ ສະຫຼາດສ່ອງມອງໄກ
ເປັນຜູ້ ໄຂປັນຍາ ໄລ່ຄວາມສະໝອງປູ້
ເປັນຜູ້ ວາງຢາຄົນໄຂ້ ວິໄຈຜົນຖືກທີ່
ມີ “ຄູ” ຄອຍຢູ່ຂ້າງ ບໍ່ວາງເຈົ້າໃຫ້ເປົ່າດາຍ ດອກນາ!

ດຽວນີ້ ໂລກາແຫ່ງກ້າວ ນຳຍຸກທັນສະໄໝ
“ຄູ” ຕ້ອງເປັນແຮງຂັບ ເຄື່ອນໄປໃຫ້ທັນໄດ້
ໄປເປັນກຳລັງຂັນສູ້ ນຳວິຊາການເດັ່ນ
ເປັນກຳລັງຊ່ວຍຍູ້ ສິດໃຊ້ໃຫ້ທ່ວງທັນ ນັ້ນແລ້ວ!

ແຕ່ວ່າ “ຄູ” ລາວຍຸກນີ້ ທະວີຄ່າຄວາມໝາຍ
ມາກມາຍຄວາມທ້າທາຍ ຄູ່ຄຽງສັງຄົມກ້າວ
ດັ່ງຫຼາວຫຼາວັດແທກໄດ້ ຄູດີ ຄຸນນະພາບເດັ່ນ
ເຫັນທັນຍຸກໃໝ່ກ້າວ ເພາະຄູຮູ້ຄ່າວິຊາ

ເຖິງຮຽມ ເນົາຢູ່ສະພາແຫ່ງຊາດພີ້ ຍັງເຫັນຄ່າຄຸນ “ຄູ” ຢູ່ໃດ
ຍັງຄະນຶງໃນດວງໃຈ ດັ່ງດຽວກາຍທຽມເນື້ອ
ຂໍໃຫ້“ຄູ” ຄົນນີ້ ເປັນກຳລັງປະກອບສ່ວນ ແດ່ເດີ!
ພັດທະນາການສຶກສາຮຸ່ງກ້າວ ຈະເລີນຂຶ້ນດັ່ງທີ່ຫວັງ ເດີ “ຄູ” ເດີ.



## ຫົກຫາຍ ສະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ອັນ**ປະກາດເອກະລາດແຫ່ງຊາດ ໄດ້ໝູນວຽນມາບັນຈົບຄົບຮອບ **80 ປີ** ໃນວັນທີ 12 ຕຸລານີ້ ອັນສຳຄັນເອກອ້າງ ເພັນງານໃຫຍ່ມີມາ ປວງປະຊາສຸກສີ ຊື່ນຊົມຍ້ອງ ປະກາດເອກະລາດລືກ້ອງ ໂລກາຮັບຊາບ ປາບຝູງມານກ່ອນກີ້ ລາວສຸກສີລື່ນລົ້ນ ພັດທະນາກ້າວກວ່າຫຼັງ **ຊອບແລ້ວ!**

❊ **ອັນ**ເວລາປ່ຽນແປງ ລະດູການປ່ຽນໄປ ຈາກປາຍຝົນສູ່ຕົ້ນລະດູໜາວເຫັນຊ່ວງແລ້ງເຕືອນວ່າ ອາກາດຈະເຢັນລົງໃນຂອບເຂດທົ່ວປະເທດ ສາເຫດມາຈາກຄວາມກົດດັນອາກາດເຢັນ ຈາກປະເທດຈີນແຜ່ມາປົກຫຸ້ມ ກຽມແຜ່ນແພຜ້າຫົ່ມ ອົບອຸ່ນກາຍາ **ທ່ານເອີຍ!** ສຸຂະພາບບໍ່ມີຊາຍ ທໍ່ໄປຕາມຫ້າງ ຈົ່ງພາກັນຮັກສາໄວ້ ກາຍໃຈໃຫ້ອົບອຸ່ນ ອັນໂຣຄາພະຍາດຮ້າຍ ຈຶ່ງໄກເອັ້ນຫ່າງໜີ **ນັ້ນແລ້ວ!**

## ຊອບຍິ້ມ

# ພົ້ງລຶ້ງ

### ເລື່ອງ: ຍິ້ມບໍ່ອອກ

ຜູ້ເປັນສີພັນລະຍາ ເຫັນຜົວໜ້າບູດບຶ້ງຕອນມາຮັບຢູ່ສະໜາມບິນ ຈຶ່ງຖາມຂຶ້ນວ່າ: “ໃຫ້ມາຮັບຊ່ຳນີ້ ເຮັດໜ້າບູດໜ້າບຶ້ງແທ້ເດ, ກະເບິ່ງຜົວຜູ້ອື່ນແດ່ດູ ເຂົາເຈົ້າລະພາກັນຍິ້ມແຍ້ມແຈ່ມໃສໝົດ”

ຜູ້ເປັນຜົວຈຶ່ງຕອບກັບໄປວ່າ: “ກໍແນວພວກເຂົາມາສົ່ງ ບໍ່ແມ່ນມາຮັບ”



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

“ຄວາມສຳເລັດບໍ່ໄດ້ຕົກຈາກຟ້າ
ແຕ່ມັນຢູ່ທີ່ການສະແຫວງຫາ ແລະ ອົດທົນ”

ລັດຖະສະພາຕ່າງປະເທດ

# ໂອຕຣິດ ອະນຸມັດການປັບປຸງກົດໝາຍປືນ

(AFP) - ໂອຕຣິດ ເຊິ່ງເປັນປະເທດທີ່ມີການເປັນເຈົ້າຂອງປືນຢ່າງແຜ່ຫຼາຍ ກະກຽມເພີ່ມຄວາມເຂັ້ມງວດກົດໝາຍທີ່ກ່ຽວຂ້ອງ ຫຼັງຈາກເກີດເຫດການຍິງສັງຫານໝູ່ໃນໂຮງຮຽນ ເຊິ່ງມີຜູ້ເສຍຊີວິດຈຳນວນ 10 ຄົນລວມທັງຜູ້ກໍ່ເຫດເມື່ອເດືອນມິຖຸນາຜ່ານມາ.

ວັນທີ 25 ກັນຍາຜ່ານມາ, ສະພາແຫ່ງຊາດ(ສະພາຕໍ່າ) ໄດ້ອະນຸມັດໃຫ້ເພີ່ມອາຍຸຕ່ຳສຸດສຳລັບການເປັນເຈົ້າຂອງປືນສັ້ນ ຈາກ 21 ປີ ເປັນ 25 ປີ ແລະ ປືນຍາວ ຈາກ 18 ປີ ເປັນ 21 ປີ ນັບຕັ້ງແຕ່ປີໜ້າເປັນຕົ້ນໄປ. ຍິ່ງໄປກວ່ານັ້ນ, ເຈົ້າຂອງປືນ ຈະຕ້ອງຜ່ານການທົດສອບທາງດ້ານຈິດຕະວິທະຍາເຊິ່ງບໍ່ແມ່ນການທົດສອບພຽງເບື້ອງຕົ້ນເທົ່ານັ້ນ, ແຕ່ຈະຕ້ອງຖືກປະເມີນເປັນເວລາ 5 ປີ; ນັກລ່າສັດ ແລະ ນັກກິລາຍິງປືນແມ່ນໄດ້ຮັບການຍົກເວັ້ນ, ເນື່ອງຈາກວ່າບຸກຄົນເຫຼົ່ານີ້ ມີການເຝິກຝົນຢ່າງເຂັ້ມງວດ.

ນິພຽງພັກເສລີພາບແຫ່ງໂອຕຣິດ ເຊິ່ງໄດ້ຮັບໄຊຊະນະໃນການເລືອກຕັ້ງຄັ້ງທຳອິດເມື່ອປີຜ່ານມາ ແຕ່ບໍ່ສາມາດຈັດຕັ້ງລັດຖະບານໄດ້ ທີ່ລົງຄະແນນສຽງຄັດຄ້ານກົດໝາຍສະບັບນີ້ ໂດຍພວກເຂົາອ້າງວ່າ ມັນເປັນການໂຈມຕີ "ພົນລະເມືອງທີ່ເຄົາລົບກົດໝາຍ" ແລະ ກ່າວວ່າ ລັດຖະບານຄວນສຸມໃສ່ການຕໍ່ຕ້ານການເປັນເຈົ້າຂອງອາວຸດທີ່ຜິດກົດໝາຍແທນ.



# EU ເລື່ອນໃຊ້ກົດໝາຍຕັດໄມ້ທຳລາຍປ່າອີກຄັ້ງ



(AFP) - ວັນທີ 23 ກັນຍາຜ່ານມາ, ສະຫະພາບເອີຣົບ ຫຼືອີຢູປະກາດວ່າ ຈະພະຍາຍາມເລື່ອນການບັງຄັບໃຊ້ກົດໝາຍຕ້ານການຕັດໄມ້ທຳລາຍປ່າ ທີ່ຖືກຄັດຄ້ານຈາກພາກທຸລະກິດ ແລະ ຄູ່ຄ້າບາງປະເທດ ອອກໄປອີກ 1 ປີ, ຮ່າງກົດໝາຍຫ້າມການນຳເຂົ້າຜະລິດຕະພັນທີ່ກ່ຽວຂ້ອງກັບການຕັດໄມ້ທຳລາຍປ່າ ເຊິ່ງມີກຳນົດຈະມີຜົນບັງຄັບໃຊ້ໃນທ້າຍປີນີ້ ເຄີຍຖືກເລື່ອນອອກໄປ 12 ເດືອນ ຄັ້ງທຳອິດເມື່ອປີ 2024; ເຖິງຢ່າງໃດກໍຕາມ, ເຈສສິກາ ໂຣສວອລລ໌ (Jessika Roswall) ກຳມະການດ້ານສິ່ງແວດລ້ອມຂອງອີຢູ ກ່າວຕໍ່ບັນດານັກຂ່າວວ່າ ລະບົບເຕັກໂນໂລຊີສະໜັບສະໜູນຍັງບໍ່ພ້ອມ ແລະ ຈຳເປັນຕ້ອງໃຊ້ເວລາອີກດົນ ເພື່ອເຮັດໃຫ້ວຽກງານມີຄວາມສະດວກ.

ດັ່ງນັ້ນ, ຄະນະກຳມະການເອີຣົບ ຫຼື ອີຊີ ຈະເລື່ອນການບັງຄັບໃຊ້ກົດໝາຍອອກໄປອີກ 1 ປີ, ໂດຍອ້າງເຖິງຄວາມກັງວົນວ່າ ທຸລະກິດໃນເອີຣົບອາດໄດ້ຮັບຜົນກະທົບ.

ການປະກາດດັ່ງກ່າວເກີດຂຶ້ນພຽງບໍ່ດົນຫຼັງຈາກ ອີຊີ ບັນລຸຂໍ້ຕົກລົງການຄ້າເສລີກັບອິນໂດເນເຊຍ ເຊິ່ງເປັນປະເທດທີ່ວິພາກວິຈານຢ່າງໜັກໜ່ວງມາຕະຫຼອດຕໍ່ກົດໝາຍສະບັບນີ້ ເຖິງແມ່ນນາງ ໂຣສວອລລ໌ ຢືນຢັນວ່າທັງສອງກໍລະນີບໍ່ກ່ຽວຂ້ອງກັນແຕ່ຢ່າງໃດ.

ກົດໝາຍດັ່ງກ່າວ ມີຜົນກະທົບຕໍ່ສິນຄ້າຫຼາຍປະເພດຕັ້ງແຕ່ກາເຟໄປຈົນເຖິງໂກໂກ້, ຖົ່ວເຫຼືອງ, ໄມ້, ນ້ຳມັນປາມ, ການລ້ຽງສັດ, ເຈ້ຍພິມ ແລະ ຢາງພາລາ ເຊິ່ງຜະລິດໃນທີ່ດິນທີ່ຖືກຕັດໄມ້ທຳລາຍປ່າຫຼັງເດືອນທັນວາ 2020; ກຳນົດໃຫ້ບໍລິສັດຕ້ອງມີຄວາມຮັບຜິດຊອບຕິດຕາມຕ່ອງໂສ້ການສະໜອງຂອງພວກເຂົາ ໂດຍໃຊ້ຂໍ້ມູນພູມສາດ ແລະ ດາວທຽມ.

ຢ່າງໃດກໍຕາມ, ຄຳສັ່ງຫ້າມດັ່ງກ່າວປະເຊີນກັບສຽງຄັດຄ້ານ ແລະ ຄວາມກັງວົນກ່ຽວກັບກົດລະບຽບທາງລັດຖະການ, ຄ່າໃຊ້ຈ່າຍ, ແລະຄວາມຈະແຈ້ງທາງກົດໝາຍ.

# ຜົນການເລືອກຕັ້ງສະມາຊິກສະພານິຕິບັນຍັດມາກາວ




(Xinhua) - ຄະນະກຳມະການເລືອກຕັ້ງເຂດບໍລິຫານພິເສດມາກາວຂອງ ສປຈີນ ຫຼື SAR (Macao Special Administrative Region) ປະກາດໃນຕອນເຊົ້າວັນທີ 15 ກັນຍາຜ່ານມາວ່າຜູ້ສະໝັກ 26 ຄົນ ໄດ້ຮັບການເລືອກຕັ້ງເບື້ອງຕົ້ນເຂົ້າສູ່ສະພານິຕິບັນຍັດ ຊຸດທີ VIII ຜ່ານການເລືອກຕັ້ງໂດຍກົງ ແລະ ໂດຍທາງອ້ອມ.

ການລົງຄະແນນສຽງເລີ່ມຂຶ້ນໃນເວລາ 9:00 ໂມງ ແລະສິ້ນສຸດລົງໃນເວລາ 21:00 ໂມງ ຂອງວັນອາທິດທີ 14 ກັນຍາ ຕາມເວລາທ້ອງຖິ່ນ.

ສະພານິຕິບັນຍັດຊຸດໃໝ່ຂອງເຂດບໍລິຫານພິເສດມາກາວ ລວມມີສະມາຊິກ 33 ຄົນ ຄື: ມາຈາກການເລືອກຕັ້ງໂດຍກົງ 14 ຄົນ, ມາຈາກການເລືອກຕັ້ງໂດຍທາງອ້ອມ 12 ຄົນ ແລະ ຖືກແຕ່ງຕັ້ງໂດຍຫົວໜ້າຄະນະບໍລິຫານງານເຂດບໍລິຫານພິເສດມາກາວ 7 ຄົນ ເຊິ່ງຈະຖືກແຕ່ງຕັ້ງພາຍໃນ 15 ວັນຫຼັງຈາກໄດ້ຮັບຜົນການເລືອກຕັ້ງຂັ້ນສຸດທ້າຍ.

ສະພານິຕິບັນຍັດຂອງ SAR ເປັນອົງການນິຕິບັນຍັດຂອງ SAR ແລະ ສະມາຊິກແມ່ນຜູ້ຢູ່ອາໄສຖາວອນຂອງ SAR, ມີວາລະການດຳລົງຕຳແໜ່ງ 4 ປີ.

ປີ 2024, ເຂດບໍລິຫານພິເສດມາກາວ ໄດ້ປັບປຸງກົດໝາຍການເລືອກຕັ້ງສະພານິຕິບັນຍັດ, ປັບປຸງຂະບວນການພິຈາລະນາມາດຕະຖານແລະເງື່ອນໄຂຂອງຜູ້ສະໝັກ ເພື່ອນຳຫຼັກການ "ຜູ້ຮັກຊາດບໍລິຫານມາກາວ" (patriotsadministering Macao) ມາໃຊ້ພາຍໃນຂອບກົດໝາຍໃຫ້ຫຼາຍຂຶ້ນ; ພ້ອມທັງປັບປຸງຂັ້ນຕອນຂອງການເລືອກຕັ້ງ ເພື່ອຮັບປະກັນໃຫ້ການເລືອກຕັ້ງດຳເນີນໄປຢ່າງຍຸຕິທຳ, ໂປ່ງໃສແລະເປັນລະບຽບຮຽບຮ້ອຍ.

ວັນທີ 25 ກັນຍາ, ສານອຸທອນຂັ້ນສຸດທ້າຍຂອງ SAR ໄດ້ຖະແຫຼງຢືນຢັນຜົນຂອງການເລືອກຕັ້ງສະພານິຕິບັນຍັດໂດຍກົງ ແລະ ໂດຍທາງອ້ອມ, ສານຍັງໄດ້ປະກາດລາຍຊື່ບັນດາສະມາຊິກສະພານິຕິບັນຍັດທີ່ໄດ້ຮັບການເລືອກຕັ້ງໃໝ່ອີກດ້ວຍ; ການຢືນຢັນຈະຖືກຈັດພິມຢູ່ໃນຈົດໝາຍເຫດທາງລັດຖະການຂອງ SAR.

ຈົດໝາຍເຫດທາງລັດຖະການ ໄດ້ປະກາດໃນວັນທີ 29 ກັນຍາວ່າ, ອີງຕາມກົດໝາຍພື້ນຖານຂອງເຂດບໍລິຫານພິເສດມາກາວ ແລະ ລະບົບການເລືອກຕັ້ງສະພານິຕິບັນຍັດ, ຊຳ ຫູ ໄຟ (Sam Hou Fai) ຫົວໜ້າຄະນະບໍລິຫານງານ SAR ໄດ້ແຕ່ງຕັ້ງສະມາຊິກສະພານິຕິບັນຍັດ ຊຸດທີ VIII ຈຳນວນ 7 ຄົນ.

# ສະພາແຫ່ງຊາດ Portugal ອະນຸມັດກົດໝາຍຄົນເຂົ້າເມືອງ



(Xinhua) - ວັນທີ 30 ກັນຍາຜ່ານມາ, ສະພາແຫ່ງຊາດປອກຕຸຍການ ໄດ້ອະນຸມັດກົດໝາຍຄົນເຂົ້າເມືອງສະບັບປັບປຸງ ເຊິ່ງກຳນົດກົດລະບຽບໃໝ່ສຳລັບການເຂົ້າເມືອງ, ການຢູ່ອາໄສ ແລະ ການໂຮມຄອບຄົວຂອງຊາວຕ່າງຊາດ.

ບົດບັນຍັດສຳຄັນປະກອບມີ: ໄລຍະເວລາ 15 ເດືອນ ສຳລັບໃບອະນຸຍາດການໂຮມຄອບຄົວຄັ້ງທຳອິດ, ຫຼັກຖານການຢູ່ຮ່ວມກັນເປັນເວລາ 18 ເດືອນກ່ອນການເຂົ້າເມືອງຂອງຄູ່ສົມລົດ ແລະ ຂໍ້ກຳນົດສຳລັບຜູ້ສະໝັກເພື່ອສະແດງຫຼັກຖານທີ່ຢູ່ອາໄສໃນປອກຕຸຍການ; ຜົນປະໂຫຍດດ້ານສະຫວັດດີການສັງຄົມ ຈະບໍ່ຖືກນຳມາພິຈາລະນາໃນການປະເມີນລາຍຮັບຄົວເຮືອນສຳລັບການຕໍ່ອາຍຸທີ່ຢູ່ອາໄສອີກຕໍ່ໄປ.

ສະພາແຫ່ງຊາດ ຍັງໄດ້ຮັບຮອງບັນດາຂໍ້ກຳນົດທີ່ອຳນວຍຄວາມສະດວກໃຫ້ແກ່ຂໍ້ຕົກລົງສອງຝ່າຍກັບປະເທດທີສາມ ເພື່ອເລັ່ງລັດຂັ້ນຕອນອອກວີຊາ ແລະ ໃບອະນຸຍາດທີ່ຢູ່ອາໄສ ແນໃສ່ເຮັດໃຫ້ລະບຽບການບໍລິຫານການເຂົ້າເມືອງຖືກກົດໝາຍງ່າຍຂຶ້ນ.

ປະຊາກອນທີ່ເກີດຢູ່ຕ່າງປະເທດຂອງປອກຕຸຍການ ເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍເຂົ້າມາເຮັດວຽກໃນຂະແໜງການຕ່າງໆ ເຊັ່ນ: ການກໍ່ສ້າງ, ການບໍລິການ ແລະ ການດູແລສຸຂະພາບ.

# California ບັງຄັບໃຊ້ກົດໝາຍ AI, ສັ່ງບໍລິສັດລາຍງານຫາກເສຍການຄວບຄຸມ



(AFP) - ກາວິນ ນິວຊໍາ (Gavin Newsom) ເຈົ້າຄອງລັດຄາລີຟໍເນຍ ໄດ້ລົງນາມໃນກົດໝາຍສະບັບໃໝ່ ທີ່ກໍານົດໃຫ້ບໍລິສັດປັນຍາປະດິດ ຫຼື ເອໄອ ລາຍໃຫຍ່ຂອງໂລກ ຕ້ອງເປີດເຜີຍມາດຕະການຄວາມປອດໄພ ແລະ ລາຍງານເຫດການສໍາຄັນຕໍ່ສາທາລະນະ.

ວັນທີ 30 ກັນຍາຜ່ານມາ, ສະກັອດ ວີເນີ (Scott Wiener) ສະມາຊິກສະພາສູງລັດຄາລີຟໍເນຍ ສັງກັດພັກເດໂມແຄຣດ ເຊິ່ງເປັນຜູ້ຊຸກດັນກົດໝາຍສະບັບນີ້ ກ່າວວ່າ ບໍລິສັດເອໄອລາຍໃຫຍ່ ຕ້ອງເປີດເຜີຍມາດຕະການຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຕົນຕໍ່ສາທາລະນະ ໂດຍຈະດໍາເນີນການຢ່າງປິດລັບເພື່ອປົກປ້ອງຊັບສິນທາງປັນຍາ.

ບໍລິສັດເຫຼົ່ານີ້ ຍັງຕ້ອງລາຍງານເຫດການດ້ານຄວາມປອດໄພຕໍ່ເຈົ້າໜ້າທີ່ລັດຖະບານ ເຊິ່ງລວມເຖິງໄພຂົ່ມຂູ່ທີ່ເກີດຈາກອາວຸດແບບຈໍາລອງ, ການໂຈມຕີທາງໄຊເບີຄັ້ງໃຫຍ່ ຫຼື ການສູນເສຍການຄວບຄຸມຮູບແບບເອໄອ ພາຍໃນ 15 ວັນ ໂດຍຈະມີການປົກປ້ອງຜູ້ແຈ້ງຂ່າວ ແລະ ພະນັກງານທີ່ເປີດເຜີຍຫຼັກຖານ.

ວີເນີ ກ່າວວ່າ ວິທີການຂອງຄາລີຟໍເນຍ ແຕກຕ່າງຈາກກົດໝາຍເອໄອຂອງສະຫະພາບເອີຣົບ ເຊິ່ງກໍານົດໃຫ້ມີການເປີດເຜີຍຂໍ້ມູນລັບຕໍ່ອົງການຂອງລັດຖະບານ; ຂະນະທີ່ກົດໝາຍສະບັບນີ້, ກໍານົດໃຫ້ມີການເປີດເຜີຍຂໍ້ມູນລັບຕໍ່ສາທາລະນະ ລວມທັງລາຍງານເອໄອທີ່ສະແດງພຶດຕິກໍາຫຼອກລວງໃນລະຫວ່າງການທົດສອບ ເປັນຄັ້ງທໍາອິດຂອງໂລກ.

ຕົວຢ່າງ, ຖ້າລະບົບຕົວະກ່ຽວກັບປະສິດທິພາບຂອງການຄວບຄຸມ ທີ່ຖືກອອກແບບເພື່ອປ້ອງກັນບໍ່ໃຫ້ເຂົ້າໄປແຊກແຊງການສ້າງອາວຸດຊີວະພາບ, ຜູ້ພັດທະນາຈະຕ້ອງເປີດເຜີຍເຫດການເຫຼົ່ານີ້.

# ອັງກິດ ປັບປຸງກົດໝາຍຜູ້ອົບພະຍົບ, ຢູ່ອາໄສຖາວອນຕ້ອງຜ່ານເງື່ອນໄຂເຂັ້ມງວດ



(Telegraph) - ວັນທີ 29 ກັນຍາຜ່ານມາ, ກະຊວງພາຍໃນຂອງອັງກິດ ໄດ້ເປີດເຜີຍແຜນການທີ່ກໍານົດວ່າ ຜູ້ອົບພະຍົບທີ່ຕ້ອງການຕັ້ງຖິ່ນຖານໃນອັງກິດ ຈະຕ້ອງໄດ້ຮັບການຈ້າງງານ, ບໍ່ຮຽກຮ້ອງຜົນປະໂຫຍດດ້ານສະຫວັດດີການ ແລະ ຕ້ອງເຮັດວຽກບໍລິການສັງຄົມ.

ປັດຈຸບັນ ຜູ້ທີ່ມີຄອບຄົວຢູ່ໃນອັງກິດ ແລະ ຜູ້ທີ່ອາໄສຢູ່ໃນປະເທດດັ່ງກ່າວ ເປັນເວລາ 5 ປີ ມີສິດໄດ້ຮັບ "ສະຖານະພາບຢູ່ອາໄສຖາວອນ" ຄືກັນກັບຜູ້ທີ່ອາໄສຢູ່ໃນອັງກິດຢ່າງຖືກກົດໝາຍເປັນເວລາ 10 ປີດ້ວຍວິຊາປະເພດໃດກໍໄດ້; ຜູ້ທີ່ບັນລຸເງື່ອນໄຂເຫຼົ່ານີ້ ຈະໄດ້ຮັບສິດໃນການຢູ່ອາໄສ, ເຮັດວຽກແລະສຶກສາໃນປະເທດອັງກິດ ລວມທັງສິດໃນການຍື່ນຂໍຮັບເງິນສະຫວັດດີການແລະສັນຊາດອັງກິດ.

ແຕ່ໃນການປ່ຽນແປງນະໂຍບາຍຄັ້ງໃຫຍ່, ນາງ ຊາບານາ ມາມູດ (Shabana Mahmood) ລັດຖະມົນຕີກະຊວງພາຍໃນຂອງອັງກິດປະກາດວ່າຜູ້ອົບພະຍົບຈະຕ້ອງຈ່າຍເງິນສົມທົບປະກັນສັງຄົມ, ບໍ່ຮຽກຮ້ອງຜົນປະໂຫຍດດ້ານສະຫວັດດີການ, ບໍ່ມີປະຫວັດອາຊະຍາກໍາ ແລະ ເປັນອາສາສະໝັກຢູ່ໃນຊຸມຊົນ ຈຶ່ງຈະສາມາດຢູ່ໃນປະເທດໄດ້.

ການປະກາດດັ່ງກ່າວມີຂຶ້ນບໍ່ດົນຫຼັງຈາກພັກປະຕິຮູບສະຫະລາຊະອານາຈັກ ເຊິ່ງເປັນພັກຝ່າຍຄ້ານຂວາຈັດ ທີ່ມີຄະແນນນໍາໃນການສໍາຫຼວດຄວາມຄິດເຫັນລະດັບຊາດ ໄດ້ປະກາດວ່າຈະຍົກເລີກສະຖານະພາບຢູ່ອາໄສຖາວອນທັງໝົດ ໂດຍຜູ້ອົບພະຍົບຈະຕ້ອງຂໍວີຊາໃໝ່ທຸກຫ້າປີ, ແລະ ນະໂຍບາຍນີ້ ຈະມີຜົນບັງຄັບໃຊ້ກັບປະຊາຊົນຫຼາຍແສນຄົນທີ່ໄດ້ຮັບໄດ້ຮັບສິດຢູ່ອາໄສຖາວອນແລ້ວ ອີກດ້ວຍ.

"ມາດຕະການເຫຼົ່ານີ້ສ້າງເສັ້ນແບ່ງທີ່ຈະແຈ້ງລະຫວ່າງລັດຖະບານພັກແຮງງານ ກັບ ພັກປະຕິຮູບ ເຊິ່ງການປະກາດເມື່ອບໍ່ດົນມານີ້ຈະບັງຄັບໃຫ້ຄົນງານທີ່ໄດ້ປະກອບສ່ວນຊ່ວຍເຫຼືອປະເທດມາດົນຫຼາຍສິບປີ ຕ້ອງປະຖິ້ມເຮືອນ ແລະ ຄອບຄົວຂອງພວກເຂົາ" ພັກແຮງງານລະບຸໃນຖະແຫຼງການ.

# ກອງປະຊຸມສຸດຍອດປະທານລັດຖະສະພາ G20 ໄຂຂຶ້ນຢູ່ອາຟຣິກາໃຕ້




(Xinhua) - ກອງປະຊຸມສຸດຍອດປະທານລັດຖະສະພາ ກຸ່ມ G20 ຄັ້ງທີ 11 ໄດ້ໄຂຂຶ້ນເມື່ອວັນພຸດທີ 1 ຕຸລາຜ່ານມາ ທີ່ແຂວງເຄບ (Cape) ຕາເວັນຕົກ, ປະເທດອາຟຣິກາໃຕ້ ໂດຍໃຫ້ຄວາມສໍາຄັນກັບການທູດລັດຖະສະພາ ເປັນຫົວໃຈສໍາຄັນຂອງການປຶກສາຫາລື; ກອງປະຊຸມຄັ້ງນີ້ ຈັດຂຶ້ນເປັນເວລາ3 ວັນທີ່ໄຄລມອນ(Kleinmond) ເມືອງແຄມທະເລເຊິ່ງຢູ່ຫ່າງຈາກເຄບທາວ (Cape Town - ນະຄອນຫຼວງນິຕິບັນຍັດຂອງອາຟຣິກາໃຕ້) ໄປທາງທິດຕາເວັນອອກປະມານ 100 ກິໂລແມັດ, ຖືເປັນຄັ້ງທໍາອິດທີ່ກອງປະຊຸມສຸດຍອດນີ້ ຈັດຂຶ້ນໃນທະວີບອາຟຣິກາ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນພາຍໃຕ້ຫົວຂໍ້ "ການນໍາໃຊ້ການທູດລັດຖະສະພາເພື່ອຄວາມເປັນຈິງແຫ່ງຄວາມສາມັກຄີ, ຄວາມສະເໝີພາບ ແລະ ຄວາມຍືນຍົງຂອງທົ່ວໂລກ"; ກອງປະຊຸມສຸດຍອດດັ່ງກ່າວ ໂດຍມີປະທານລັດຖະສະພາຈາກປະເທດສະມາຊິກ G20 ແລະ ບັນດາປະເທດທີ່ໄດ້ຮັບເຊີນ ເຂົ້າຮ່ວມ.

ໂທໂກ ດິດິຊາ (Thoko Didiza) ປະທານສະພາແຫ່ງຊາດອາຟຣິກາໃຕ້ ກ່າວຄໍາເຫັນໄຂກອງປະຊຸມວ່າ: ຫົວຂໍ້ກອງປະຊຸມຄັ້ງນີ້ເນັ້ນໜັກເຖິງຄວາມຈໍາເປັນຂອງພາວະຜູ້ນໍາທີ່ຮ່ວມມືກັນເພື່ອແກ້ໄຂບັນດາສິ່ງທ້າທາຍທົ່ວໂລກ. ນາງຍົກໃຫ້ເຫັນບັນດາຂົງເຂດບູລິມະສິດຂອງກອງປະຊຸມສຸດຍອດຄັ້ງນີ້ ເຊິ່ງລວມເຖິງຄວາມສາມາດໃນການຮັບມືກັບໄພພິບັດ, ການສະໜອງທຶນໃນການຫັນປ່ຽນດ້ານພະລັງງານຢ່າງຍຸຕິທໍາ, ການຮັບປະກັນຄວາມຍືນຍົງຂອງໜີ້ສໍາລັບປະເທດທີ່ມີລາຍຮັບຕໍ່າ, ການນໍາໃຊ້ຜົນປະໂຫຍດຈາກແຮ່ທາດສໍາຄັນເພື່ອການເຕີບໂຕຢ່າງທົ່ວເຖິງ, ແລະການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງແລະຊາວໜຸ່ມ.

ກາເບຣຍລາ ໂມຣາຟສະກາ-ສະຕາເນກກາ (Gabriela Morawska-Stanecka)ຮອງປະທານສະຫະພັນລັດຖະສະພາສາກົນ (IPU) ໄດ້ເນັ້ນໜັກເຖິງບົດບາດຂອງລັດຖະສະພາໃນການແກ້ໄຂວິກິດການຂ້າມຊາຍແດນ; ນາງເນັ້ນໜັກວ່າ, ການທູດລັດຖະສະພາຕ້ອງຂັບເຄື່ອນຄວາມສາມັກຄີ, ຄວາມສະເໝີພາບ ແລະ ຄວາມຍືນຍົງ.

ນາງ ເອັມມາໂມໂລໂກ ຄູບາຢີ (Mmamoloko Kubayi) ລັດຖະມົນຕີກະຊວງຍຸຕິທໍາ ແລະ ການພັດທະນາລັດຖະທໍາມະນູນ ກ່າວຄໍາປາໄສໃນນາມປະທານາທິບໍດີຊີຣິວຣາມາໂຟຊາ (Cyril Ramaphosa) ໄດ້ອະທິບາຍເຖິງກອງປະຊຸມສຸດຍອດດັ່ງກ່າວວ່າແມ່ນ "ການຮຽກຮ້ອງໃຫ້ລັດຖະສະພາ G20 ລົງມືປະຕິບັດ" ເພື່ອກ້າວໄປສູ່ຄວາມສາມັກຄີ, ຄວາມສະເໝີພາບ ແລະ ຄວາມຍືນຍົງ.

# ລັດຖະສະພາ Kyrgyzstan ຕົກລົງຍຸບສະພາ




(Xinhua) - ສະມາຊິກສະພາສູງສຸດ ແຫ່ງ ສາທາລະນະລັດກຣຽກກິດຫຼືກຣຽກກິດສະຖານ ໄດ້ຕົກລົງຍຸບສະພາ ເມື່ອວັນທີ 25 ກັນຍາຜ່ານມາ.

"ທີ່ກອງປະຊຸມສະພາສູງສຸດໃນວັນທີ25ກັນຍາ2025, ສະມາຊິກສະພາ ໄດ້ພິຈາລະນາ ແລະ ຮັບຮອງເອົາຮ່າງມະຕິວ່າດ້ວຍການຍຸບສະພາສູງສຸດ ຊຸດທີVII", ສໍານັກຂ່າວຂອງສະພາສູງສຸດ ລາຍງານ.

ຮ່າງມະຕິສະບັບນີ້ ໄດ້ຮັບການສະໜັບສະໜູນຢ່າງແຂງແຮງ ໂດຍມີສະມາຊິກສະພາ84 ຄົນ ລົງຄະແນນສຽງເຫັນດີ ຫຼັງຈາກສະມາຊິກສະພາ 32 ຄົນ ໄດ້ສະເໜີມາດຕະການເພື່ອຫຼີກລ່ຽງການຈັດການເລືອກຕັ້ງສະມາຊິກສະພາສູງສຸດແລະປະທານາທິບໍດີ ພາຍໃນໄລຍະເວລາອັນສັ້ນ.

ນູຣ໌ລານເບກ ຕູຣ໌ກຸນເບກ ອູລູ (Nurlanbek Turgunbek uulu) ປະທານສະພາສູງສຸດ ກ່າວໃນວັນດຽວກັນວ່າ: ປະຕິບັດຕາມທຸກຂັ້ນຕອນ, ການເລືອກຕັ້ງສະພາສູງສຸດກ່ອນກໍານົດ ຄວນຈັດຂຶ້ນໃນວັນທີ 30 ພະຈິກປີນີ້. ເຖິງວ່າຈະມີການຍຸບສະພາເອງ, ສະມາຊິກສະພາຊຸດປັດຈຸບັນ ຍັງຈະມີອໍານາດຕໍ່ໄປຈົນກວ່າຈະມີການເລືອກຕັ້ງສະພາຊຸດໃໝ່ ແລະ ອາດຍັງຈັດກອງປະຊຸມສະໄໝວິສາມັນໄດ້ ຖ້າຈໍາເປັນ.

ວັນທີ 30 ກັນຍາ, ປະທານາທິບໍດີ ຊາດີຣ໌ ຈາປາຣອຟ (Sadyr Japarov) ໄດ້ລົງນາມໃນລັດຖະດໍາລັດກໍານົດການເລືອກຕັ້ງສະມາຊິກສະພາສູງສຸດລ່ວງໜ້າ ໃນວັນອາທິດທີ 30 ພະຈິກ 2025, ອີງຕາມການປະກາດໃນເວັບໄຊປະທານາທິບໍດີ.

ພາຍໃຕ້ລັດຖະທໍາມະນູນ, ສະພາສູງສຸດ ເປັນອົງການສະພານິຕິບັນຍັດທີ່ມີສະມາຊິກ 90 ຄົນ, ມີອາຍຸການ 5 ປີ. ຕາມກໍານົດເດີມ, ການເລືອກຕັ້ງສະມາຊິກສະພາສູງສຸດ ໄດ້ກໍານົດໄວ້ໃນເດືອນພະຈິກ 2026 ແລະ ການເລືອກຕັ້ງປະທານາທິບໍດີໃນເດືອນມັງກອນ 2027.

# ເມື່ອເສດຖີຍົກຍ້າຍໜີ ຖົງເງິນກໍໜີໄປນຳ

❖ ວິເສດ ສະແຫວງສຶກສາ

ໃນບົດປະຈຳ "ຜູ້ແທນປະຊາຊົນ" ສະບັບນີ້ ທ່ານຜູ້ອ່ານຈະໄດ້ຮູ້ກ່ຽວກັບຄວາມກັງວົນໃຈຂອງບາງປະເທດຮັ່ງມີໃນສະຫະພາບເອີຣົບ ຫຼື ອີຢູ (EU) ຍ້ອນຖົງເງິນກຳລັງຈະກັບມະຫາຍໄປຍ້ອນເຫຼົ່າເສດຖີມີທ່າອຽງຍົກຍ້າຍໄປຢູ່ປະເທດອື່ນ ທີ່ມີສະພາບເອື້ອອຳນວຍກວ່າໃນການລົງທຶນ ກໍຄືການເຄື່ອນໄຫວເຮັດທຸລະກິດ, ເລື່ອງທີ 2 ແຖມທ້າຍ ກໍແມ່ນຂ່າວກ່ຽວກັບການເຮັດທຸລະກຳດ້ວຍສະກຸນເງິນທ້ອງຖິ່ນໃນ 3 ປະເທດຢູ່ອາຊຽນ.

ສຳລັບເລື່ອງທີ 1 ນັ້ນ, ຂ່າວຕ່າງປະເທດໃນທ້າຍເດືອນກໍລະກົດປີນີ້ (ໜັງສືພິມປະຊາຊົນ 29/7/2025) ໄດ້ໃຫ້ຮູ້ວ່າ ໃນຊຸມປີຫຼັງໆມານີ້ ບັນດາເສດຖີຖົງເງິນໜັກໆ ຢູ່ປະເທດອັງກິດ ໄດ້ພາກັນທະຍອຍຫອບເງິນໜີໄປຢູ່ປະເທດອື່ນທີ່ເອື້ອອຳນວຍໃນການລົງທຶນ ແລະ ດຳເນີນທຸລະກິດ. ບໍລິສັດ ເຮັນລີ & ພາດເນີ (Henley & Partners) ຂອງອັງກິດ ທີ່ເຮັດໜ້າທີ່ໃຫ້ຄຳປຶກສາກ່ຽວກັບການຍົກຍ້າຍຖິ່ນຖານ ເພື່ອການລົງທຶນໄດ້ໃຫ້ຮູ້ວ່າ ສະເພາະໃນປີ 2025 ທີ່ຍັງບໍ່ທັນໝົດປີເທື່ອນີ້ ໄດ້ມີນັກທຸລະກິດລະດັບມະຫາເສດຖີຍົກຍ້າຍໄປຢູ່ປະເທດອື່ນສູງເຖິງ 16,500 ຄົນ ແຕ່ຖ້ານັບຈຳນວນມະຫາເສດຖີໃນທົ່ວໂລກທີ່ຍົກຍ້າຍຈາກປະເທດຂອງຕົນໄປຢູ່ບ່ອນອື່ນ ຕົວເລກກໍຈະກະດຶບຂຶ້ນສູງເຖິງ 142,000 ຄົນ, ຢ່າລືມວ່າມະຫາເສດຖີເຫຼົ່ານີ້ບໍ່ໄດ້ຍ້າຍໄປແຕ່ໂຕໂຂ້ໂຫຼ້ ແຕ່ໄດ້ຫິ້ວຖົງເງິນໄປນຳ; ນີ້ລະຄືຄວາມເປັນຫ່ວງຂອງຫຼາຍປະເທດ ໃນນັ້ນ, ອັງກິດເປັນປະເທດທີ່ປະເຊີນກັບບັນຫານີ້ຫຼາຍ. ອີກ 3 ປະເທດໃນອີຢູ ທີ່ພົບກັບບັນຫາເສດຖີຍົກຍ້າຍໜີ ກໍຄືຝຣັ່ງ ເຊິ່ງມີເສດຖີຍົກຍ້າຍໜີໃນປີ 2025 ສູງເຖິງ 800 ຄົນ, ແອັດສະປາຍ (ສະເປນ) 500 ຄົນ ແລະ ເຢຍລະມັນ 400 ຄົນ; ອັງກິດ, ຝຣັ່ງ, ເຢຍລະມັນ ແລະ ແອັດສະປາຍ ແມ່ນ 4 ປະເທດ ທີ່ມີເສດຖີເຂັ້ມແຂງທີ່ສຸດໃນເອີຣົບ. ຂ່າວບໍ່ໄດ້ບອກວ່າ ສາເຫດຕົ້ນຕໍຂອງການຍ້າຍໜີຂອງເຫຼົ່າມະຫາເສດຖີມີຄືແນວໃດ, ມີແຕ່ເວົ້າສີລວມໆວ່າ ສຳລັບຢູ່ອັງກິດນັ້ນ ແມ່ນຍ້ອນການປ່ຽນແປງຂອງລະບອບພາສີ ແຕ່ສຳຄັນໄປກວ່ານັ້ນ ແມ່ນຍ້ອນເຫຼົ່າມະຫາເສດຖີເຫັນວ່າຢູ່ປະເທດອື່ນ ມີໂອກາດດຳເນີນທຸລະກິດ ແລະ ການລົງທຶນດີກວ່າຢູ່ ອັງກິດ, ຝຣັ່ງ, ເຢຍລະມັນ ແລະ ແອັດສະປາຍ; ການຍົກຍ້າຍໜີຂອງບັນດານັກທຸລະກິດຖົງເງິນໜັກໆນີ້ ຈະສົ່ງຜົນກະທົບໃນໄລຍະຍາວນານ ຕະຫຼອດຄວາມສາມາດ ໃນການແຂ່ງຂັນດ້ານເສດຖະກິດ ແລະ ການລົງທຶນຂອງປະເທດນີ້. ກ່າວມາເຖິງນີ້ໂດຍສະເພາະແມ່ນອັງກິດ ທີ່ມີເສດຖີຍົກຍ້າຍໜີຫຼາຍກວ່າໝູ່, ຈາກຂ່າວນີ້ ພໍສະຫຼຸບໄດ້ວ່າ ການດຶງບັນດາເສດຖີໃຫ້ຢູ່ນັ້ນ ມີຄວາມສຳຄັນທີ່ສຸດ ເພາະເມື່ອເສດຖີຍົກຍ້າຍໜີ ຖົງເງິນກໍຈະໜີໄປນຳ; ປະເທດທີ່ມີຄວາມສາມາດທາງການແຂ່ງຂັນດ້ານເສດຖະກິດ ແລະ ການລົງທຶນ ແມ່ນຍ້ອນສາມາດຮັກສາຈຳນວນເສດຖີໃຫ້ຢູ່ພັດທະນາຕໍ່ເປັນໄລຍະຍາວ ຫຼື ຕະຫຼອດໄປ, ຢາກເຮັດໄດ້ແນວນັ້ນ ຕ້ອງມີນະໂຍບາຍເອື້ອອຳນວຍທີ່ຈຳເປັນຕ່າງໆ ຢ່າໃຫ້ນັກລົງທຶນມາລົງທຶນພຽງຊົ່ວຄາວແລ້ວກໍປັດກົ້ນໜີອາດຫຼາດ!

ເລື່ອງແຖມທ້າຍບົດນີ້ ກໍເປັນເລື່ອງເງິນໆເຊັ່ນກັນ ແຕ່ມັນກ່ຽວກັບການເຮັດທຸລະກິດດ້ວຍສະກຸນເງິນຂອງປະເທດໃຜລາວ ໂດຍບໍ່ອາໄສສະກຸນເງິນແຂງ ເຊັ່ນໂດລາຄືເມື່ອກ່ອນ. ຂ່າວບອກວ່າໃນມໍ່ໆມານີ້ ອິນໂດເນເຊຍ, ມາເລເຊຍ ແລະ ໄທ 3 ປະເທດໃນອາຊຽນ ໄດ້ເລີ່ມ"ເຍົກ"ໃນການເຮັດໂຄງການການບໍລິການເງິນຕາຂ້າມສະກຸນ ເພື່ອຂະຫຍາຍການເຮັດທຸລະກຳທະວິພາຄີດ້ວຍສະກຸນເງິນທ້ອງຖິ່ນລະຫວ່າງ 3 ປະເທດຄື: ເງິນຣູເປຍຂອງອິນໂດເນເຊຍ, ເງິນຣິງກິດຂອງມາເລເຊຍ ແລະ ເງິນບາດຂອງໄທ ເຊິ່ງຈະອຳນວຍຄວາມສະດວກໃນການເຮັດທຸລະກຳຂ້າມຊາຍແດນເພື່ອການຄ້າສິນຄ້າ, ການບໍລິການ, ການລົງທຶນໂດຍກົງ ແລະ ການລົງທຶນໃນຫຼັກຊັບ; ເຮັດໄດ້ແນວນີ້ ກໍຈະສາມາດປົດແອກອອກຈາກການຄອບງຳຂອງສະກຸນເງິນ "ເສືອນອນກິນ" ເຊັ່ນ: ໂດລາສະຫະລັດ, ຢູໂຣ ແລະ ອື່ນໆ.

ທະນາຄານພັດທະນາລາວ
LDB Bank

## ຮຽນພາສາຜ່ານສຽງຫົວ



#ບ່າວກະບື

**ຕຳຫຼວດ:** "ຂ້ອຍຊິເຮັດບົດບັນທຶກກ່ຽວກັບກໍລະນີຂອງເຈົ້າ, ເຈົ້າຂັບລົດດ້ວຍຄວາມໄວເກົ້າສິບກິໂລແມັດຕໍ່ຊົ່ວໂມງພຸ້ນ".

**ຄົນຂັບລົດ:** "ເລື່ອງນີ້ບໍ່ເປັນຄວາມຈິງ, ຂ້ອຍຫາກໍ່ຂັບອອກຈາກເຮືອນ ຢ່າງເກັ່ງກໍ່ໄດ້ສິບນາທີເທົ່ານັ້ນລະ".

#BAOKBU

Policeman: "I'll have to report you. You were driving at ninety kilometers an hour".

Driver: "Nonesense, I've only been driving from my house for ten minutes at most".

## ຕາມພາສາກາຕູນ






ຄອງຖ້າລົດມາເກັບມື້ຮຽນຂີ້ເຫຍື້ອຫຼາຍມື້ແລ້ວ

● ໂດຍ : ພູຜາ

## ນຳສະເໜີ...

(ຕໍ່ຈາກໜ້າ 4)

ໜູນວຽກງານຕິດຕາມກວດກາຂອງກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ; ກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ທີ່ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ; 3. ສະໜັບສະໜູນກຳມາທິການກົດໝາຍແລະສະຖາບັນຄົ້ນຄວ້ານິຕິກຳ ໃນການທົບທວນນິຕິກຳທີ່ກ່ຽວຂ້ອງກັບວຽກງານຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ກຳມາທິການແຜນການ, ການເງິນ ແລະ ການກວດສອບ.

ການນຳສະເໜີຮ່າງບົດບັນທຶກຄວາມເຂົ້າໃຈ ເຮັດໃຫ້ຜູ້ເຂົ້າຮ່ວມໄດ້ເຫັນເຖິງພາບລວມຂອງໂຄງການໃໝ່ທີ່ຈະມາເຖິງ ທັງເປັນບ່ອນອີງໃນການກະກຽມຄວາມພ້ອມດ້ານການຈັດຕັ້ງປະຕິບັດກິດຈະກຳ ແລະ ບຸກຄະລາກອນ ເພື່ອສຳເລັດຕາມຂອບເວລາຂອງໂຄງການທີ່ວາງໄວ້.

ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ປະກອບຄຳເຫັນ, ສົນທະນາແລກປ່ຽນ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ທັງເປັນຂໍ້ມູນໃນການຈັດຕັ້ງປະຕິບັດກິດຈະກຳໃນໂຄງການໄລຍະໃໝ່ນີ້ ເວົ້າລວມ, ເວົ້າສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ ສພຊ ແລະ ສພຂ ໃນການວາງນະໂຍບາຍໂດຍອີງໃສ່ຫຼັກຖານ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳ.

**(ນາງ ກຸກກິກ ບຸດດາໄຊ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ